ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກໍາ ແລະ ປ່າໄມ້

# ນະໂຍບາຍແຫ່ງຊາດ
# ວ່າດ້ວຍ ການສົ່ງເສີມການປູກພືດ ຂອງ ສປປ ລາວ

ມິຖຸນາ 2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 226 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 10-07.2023

# ດຳລັດ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຕົກລົງ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ເມສາ 2023 (ວັນທີ 25-26 ເມສາ 2023) ສະບັບເລກທີ 06/ລບ, ລົງວັນທີ 28 ເມສາ 2023;
- ອີງຕາມ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ ສະບັບລົງວັນທີ 06 ມິຖຸນາ 2023.
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2850/ກປ, ລົງວັນທີ 12 ມິຖຸນາ 2023.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ.

**ມາດຕາ 2** ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດສະບັບດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ແລະ ລາຍງານໃຫ້ລັດຖະບານ ຊາບ ເປັນແຕ່ລະໄລຍະ.

**ມາດຕາ 3** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ເພື່ອຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ

# ສາລະບານ


ພາກທີ I ພາກສະເໜີ ........ 1

1. ສະພາບລວມ ........ 1

2. ທ່າແຮງ ........ 2

2.1. ທ່າແຮງສະພາບການຂອງພາກພື້ນ ແລະ ສາກົນ ........ 2

2.2. ທ່າແຮງພື້ນຖານ ........ 3

2.3. ທ່າແຮງດ້ານປັດໄຈການຜະລິດ ........ 5

2.4. ທ່າແຮງດ້ານ ຕະຫຼາດພືດ ແລະ ຜະລິດຕະພັນພືດ ........ 6

2.5. ທ່າແຮງດ້ານນະໂຍບາຍຂອງລັດ ໃນການສົ່ງເສີມການລົງທຶນດ້ານການປູກຝັງ ........ 7

2.6. ທ່າແຮງດ້ານໂຄງລ່າງພື້ນຖານວັດຖຸເຕັກນິກ ........ 8

2.7. ທ່າແຮງທາງດ້ານຄົມມະນາຄົມ ........ 8

2.8. ລະບຽບຄຸ້ມຄອງ ແລະ ມາດຕະການດ້ານວິຊາການ ........ 9

3. ບັນຫາ ........ 9

3.1. ບັນຫາລວມ: ........ 10

3.2. ບັນຫາຂອງຊາວກະສິກອນ ແລະ ຜູ້ປະກອບການ ........ 11

3.3. ບັນຫາດ້ານການຕະຫຼາດ ແລະ ລາຄາ ........ 12

4. ກາລະໂອກາດຂອງ ສປປ ລາວ ........ 13

5. ສິ່ງທ້າທາຍ ........ 14

ພາກທີ II ຈຸດປະສົງ, ເປົ້າໝາຍ ແລະ ຂອບເຂດການນຳໃຊ້ ........ 15

1. ຈຸດປະສົງ ........ 15

2. ເປົ້າໝາຍ ........ 16

2.1. ເປົ້າໝາຍທາງດ້ານເສດຖະກິດ ........ 16

2.2. ເປົ້າໝາຍທາງດ້ານສັງຄົມ ........ 16

2.3. ເປົ້າໝາຍທາງດ້ານສິ່ງແວດລ້ອມ ........ 17

3. ຂອບເຂດການນຳໃຊ້ ........ 17

ພາກທີ III ເນື້ອໃນຂອງນະໂຍບາຍສົ່ງເສີມການປູກພືດ.................................18
1. ນະໂຍບາຍທີ່ດິນ ສຳລັບ ການປູກພືດ .......................................18
2. ນະໂຍບາຍປັດໄຈການຜະລິດ ...............................................20
3. ນະໂຍບາຍສົ່ງເສີມດ້ານຄຸນນະພາບ ແລະ ການປຸງແຕ່ງພືດ...............22
4. ນະໂຍບາຍດ້ານການສົ່ງອອກພືດ ແລະ ຜະລິດຕະພັນພືດ................25
5. ນະໂຍບາຍບຸກຄະລາກອນ ແລະ ຜູ້ອອກແຮງງານ ........................27
6. ນະໂຍບາຍຮັບປະກັນຄວາມສ່ຽງ ຕໍ່ການປູກພືດ ..........................28
7. ນະໂຍບາຍ ສົ່ງເສີມການນຳໃຊ້ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທັນສະໄໝ ແລະ ພະລັງງານ.................................................30
8. ນະໂຍບາຍດ້ານສິນເຊື່ອ ແລະ ການເຂົ້າເຖິງແຫຼ່ງທຶນ .....................32
ພາກທີ IV ມາດຕະການຈັດຕັ້ງປະຕິບັດ..................................................36
ພາກທີ V ການຕິດຕາມ ແລະ ປະເມີນຜົນ ..............................................39

# ຄຳນຳ

ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ ສະບັບນີ້ ສ້າງຂຶ້ນເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ເປັນຮູບປະທຳ ຊຶ່ງແມ່ນພາລະກິດຕົ້ນຕໍໃນການສ້າງພື້ນຖານທີ່ໜັກແໜ້ນໃຫ້ແກ່ການພັດທະນາ ເພື່ອນຳເອົາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ສືບຕໍ່ກ້າວໄປສູ່ຈຸດໝາຍສັງຄົມນິຍົມ, ນະໂຍບາຍສະບັບນີ້ ໄດ້ກຳນົດແນວທາງນະໂຍບາຍຂອງພາກລັດເພື່ອອຳນວຍຄວາມສະດວກ, ຊຸກຍູ້, ສົ່ງເສີມການປູກພືດ ແລະ ຜະລິດຕະພັນພືດ ຂອງ ສປປ ລາວ ແນໃສ່ສົ່ງເສີມການປູກພືດຂອງ ບຸກຄົນ, ກຸ່ມ, ສະຫະກອນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຜະລິດ ກ່ຽວກັບ ການປູກຝັງ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ຮັບປະກັນການສະໜອງຜົນຜະລິດພືດ ແລະ ຜະລິດຕະພັນພືດ ໃຫ້ພຽງພໍ, ປອດໄພ, ມີໂພຊະນາການ, ເປັນສິນຄ້າ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນດ້ານການຄ້າຂອງ ສປປ ລາວ ໃຫ້ນັບມື້ນັບສູງຂຶ້ນ.

ນະໂຍບາຍສະບັບນີ້ຍັງມີຄວາມສຳຄັນໃນການສ້າງເງື່ອນໄຂໃຫ້ແກ່ຂະແໜງການ ເພື່ອຈັດຕັ້ງປະຕິບັດຄາດໝາຍສູ້ຊົນດ້ານການຜະລິດສະບຽງອາຫານ ແລະ ຜະລິດສິນຄ້າກະສິກຳ ທີ່ໄດ້ກຳນົດໄວ້ໃນທິດທາງແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ສຳເລັດຜົນ. ນອກຈາກນັ້ນ, ຍັງເປັນການກຽມຄວາມພ້ອມຂອງຂະແໜງການ ເພື່ອເຊື່ອມໂຍງກັບການເຂົ້າຮ່ວມໃນເວທີພາກພື້ນ ແລະສາກົນ ທີ່ ສປປ ລາວ ເປັນພາຄີ.

ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ ສະບັບນີ້ ແມ່ນລວມເອົາການຕີລາຄາສະພາບລວມ ກ່ຽວກັບ ການປູກພືດ, ການວິເຄາະເຖິງທ່າແຮງ, ບັນຫາ, ກາລະໂອກາດ, ສິ່ງທ້າທາຍ, ເຫດຜົນ, ຄວາມຈຳເປັນ, ເປົ້າໝາຍ ແລະ ເນື້ອໃນ 08 ຂໍ້ ເພື່ອສະໜັບສະໜູນ ແລະ ສ້າງສິ່ງເອື້ອອຳນວຍໃຫ້ແກ່ລະບົບຕ່ອງໂສ້ມູນຄ່າຂອງການຜະລິດພືດ ຂອງ ສປປ ລາວ ນັບຕັ້ງແຕ່ຂັ້ນຕອນການຜະລິດ ໄປຈົນເຖິງການປຸງແຕ່ງ, ຈໍລະຈອນ ແລະ ການຄ້າ. ນອກຈາກນັ້ນ, ຍັງມີການຄາດຄະເນຜົນໄດ້ຮັບ, ກຳນົດມາດຕະການ, ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນ. ນະໂຍບາຍສະບັບນີ້ຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນໄດ້ກໍຕໍ່ເມື່ອໄດ້ມີການປະກອບສ່ວນຢ່າງຕັ້ງໜ້າຂອງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ.

ກະຊວງກະສິກຳ ແລະ ປ່າໄມ້ ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈເປັນຢ່າງສູງ ມາຍັງພະນັກງານທຸກທ່ານ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ທຸ້ມເທເຫື່ອແຮງ, ສະຕິປັນຍາ ແລະ ເວລາທີ່ມີຄຸນຄ່າຂອງຕົນ ເຂົ້າໃນການສ້າງນະໂຍບາຍສະບັບນີ້ຈົນສຳເລັດ, ນະໂຍບາຍສະບັບນີ້ ອາດມີບາງເນື້ອໃນທີ່ຍັງບໍ່ສອດຄ່ອງ ແລະ ຄົບຖ້ວນ. ດັ່ງນັ້ນ, ພວກເຮົາຈຶ່ງມີຄວາມຍິນດີ ທີ່ຈະຮັບເອົາທຸກຄຳຄິດເຫັນທີ່ເປັນປະໂຫຍດຂອງບັນດາທ່ານ ເພື່ອນຳໄປປັບປຸງ ຫຼື ແກ້ໄຂໃຫ້ສອດຄ່ອງໃນຂັ້ນຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ 0 6 JUN 2023.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ★ ລັດຖະມົນຕີ ★

ພ. ພຸດພາ

**ປອ. ເພັດ ພົມພິພັກ**

# ພາກທີ I
## ພາກສະເໜີ

### 1. ສະພາບລວມ

ເພື່ອເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນ ມະຕິກອງປະຊຸມຄົບຄະນະ ຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ XI, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025), ຍຸດທະສາດກະສິກຳ ຮອດປີ 2025 ແລະ ວິໄສທັດຮອດປີ 2030 ພ້ອມທັງ ຜັນຂະຫຍາຍການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ (2021-2023) ໃຫ້ປະກົດຜົນເປັນຈິງ ຕາມຄາດໝາຍທີ່ວາງໄວ້ ເຊິ່ງຂະແໜງການປູກຝັງ ຖືໄດ້ວ່າເປັນຂະ ແໜງການທີ່ມີບົດບາດສຳຄັນໃນວຽກງານກະສິກຳ ໂດຍສະເພາະການປະຕິບັດຕາມແຜນງານການຜະລິດສະບຽງອາຫານ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ. ການປູກຝັງເປັນປັດໄຈສຳຄັນພື້ນຖານໃຫ້ແກ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ເວົ້າລວມແລ້ວ 52 % ຂອງພົນລະເມືອງລາວ ແມ່ນອາໃສການຜະລິດກະສິກຳເປັນອາຊີບຕົ້ນຕໍ, ການຈະເລີນເຕີບໂຕຂອງລາຍຮັບແຫ່ງຊາດຈາກຂະແໜງກະສິກຳ ແລະ ປ່າໄມ້ 16 %, ໃນນັ້ນ 10,4 % ແມ່ນຂະແໜງການປູກຝັງ (ຂໍ້ມູນປີ 2021).

ການຈັດຕັ້ງປະຕິບັດ ແຜນພັດທະນາກະສິກຳ ແລະ ປ່າໄມ້ ໃນໄລຍະ 5 ປີຜ່ານມາ ຂະແໜງການປູກຝັງພວກເຮົາໄດ້ຈັດຕັ້ງປະຕິບັດ ແລະ ປະກອບສ່ວນ ໃນການຄຸ້ມຄອງ ແລະ ນຳໃຊ້ປັດໄຈການຜະລິດຕ່າງໆ (ແນວພັນ, ຝຸ່ນ ແລະ ຢາປາບສັດຕູພືດ), ຄຸ້ມຄອງການລົງທຶນດ້ານການປູກຝັງ ແລະ ບັນດາ

ໂຮງງານປຸງແຕ່ງພືດໄດ້ຮັບການຄຸ້ມຄອງຢ່າງເປັນລະບົບ ແລະ ສ້າງຕາໜ່າງປ້ອງກັນພືດ ໄດ້ມີການພັດທະນາລິງຮອດທ້ອງຖິ່ນ, ການພັດທະນາດ້ານປະລິມານ ແລະ ຄຸນນະພາບຂອງຜົນຜະລິດ ຕະຫຼອດຮອດລະບົບການຢັ້ງຢືນມາດຕະຖານການຜະລິດກະສິກຳອິນຊີ ແລະ ກະສິກຳທີ່ດີ, ລະບົບສຸຂານາໄມ ແລະ ສຸຂານາໄມພືດ ກໍ່ໄດ້ຮັບການພັດທະນາຢ່າງຮອບດ້ານ ໂດຍລວມແລ້ວການຜະລິດສະບຽງອາຫານ ພວກເຮົາສາມາດຄໍ້າປະກັນໄດ້ໂດຍພື້ນຖານ ແລະ ມີສ່ວນເຫຼືອຂາຍເປັນສິນຄ້າ ໂດຍສະເພາະຜົນຜະລິດເຂົ້າເປືອກ ໃນລະດັບ 3,8 ລ້ານໂຕນ/ປີ (ຮັບປະກັນສະບຽງອາຫານ 2,5 ລ້ານໂຕນ ສ່ວນທີ່ເຫຼືອແມ່ນຂາຍພາຍໃນ ແລະ ສົ່ງອອກຈຳນວນໜຶ່ງ), ການຜະລິດພືດສະບຽງອາຫານ 2,3 ລ້ານໂຕນ/ປີ, ເດັ່ນກວ່າໝູ່ແມ່ນ ໄມ້ໃຫ້ໝາກ 704.000 ໂຕນ, ສາລີຫວານ 185.000 ໂຕນ, ເຜືອກ/ມັນ 245.000 ໂຕນ ແລະ ພືດຜັກຕ່າງໆ 1.2 ລ້ານໂຕນ ແລະ ການຜະລິດພືດສິນຄ້າ ປະຕິບັດໄດ້ສະເລ່ຍ 6.8 ລ້ານໂຕນ, ເດັ່ນກວ່າໝູ່ແມ່ນການຜະລິດ ມັນຕົ້ນ 2.7 ລ້ານໂຕນ, ອ້ອຍ 1.35 ລ້ານໂຕນ, ສາລີແຂງ 550.000 ໂຕນ, ໝາກເດືອຍ 195.000 ໂຕນ ແລະ ກາເຟ 150.134 ໂຕນ ແລະ ອື່ນໆ) ເຊິ່ງເຮັດໃຫ້ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ໃນໄລຍະ 5 ປີ ທີ່ຜ່ານມາ ມີມູນຄ່າ 4 ຕື້ໂດລາສະຫະລັດ, ປີ 2021 ຈຳນວນ 3.554.092 ໂຕນ, ມູນຄ່າ 997 ລ້ານໂດລາ ແລະ ປີ 2022 ຈຳນວນ 4.358.800 ໂຕນ, ມູນຄ່າ 1.360 ລ້ານໂດລາສະຫາລັດ.

## 2. ທ່າແຮງ

### 2.1. ທ່າແຮງສະພາບການຂອງພາກພື້ນ ແລະ ສາກົນ

ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ, ການປະຕິບັດສັນຍາ ແລະ ສົນທິສັນຍາ ພາກພື້ນ ແລະ ສາກົນ ທີ່ ສປປ ລາວ ເປັນພາຄີໂດຍສະເພາະແມ່ນການເຂົ້າຮ່ວມເຂດການຄ້າເສລີອາຊຽນ ແລະ ອາຊຽນ+3, ການເຊັນສັນຍາ ກັບ ສປ ຈີນ ຈຳນວນ 16 ພືດ (ສາລີ,

ມັນຕົ້ນ, ໝາກກ້ວຍ, ເຂົ້າສານ, ຫົວກະທິດ, ໝາກໂມ, ຖົ່ວຝັກຍາວ, ຖົ່ວເຫຼືອງຝັກສົດ, ຖົ່ວເບີ, ໝາກໝອດສົດ, ໝາກກ້ຽງເປືອກໜາ, ໝາກພຸກ, ໝາກນາວເຫຼືອງ, ຢາຫົວ, ເຄື່ອງແດງດ່າງ ແລະ ໃບຢາສູບ), ເຊັນສັນຍາ ກັບ ສສ ຫວຽດນາມ ຈຳນວນ 16 ພືດ (ສາລີ, ມັນຕົ້ນ, ໝາກກ້ວຍ, ເຂົ້າສານ, ຫົວກະທິດ, ຫົວຜັກບົ່ວໃຫຍ່, ຫຍ້າເນເປຍ, ໝາກມັງກອນ, ໝາກນອດ, ໝາກກ້ຽງຂຽວ, ໝາກມ່ວງ, ໝາກກ້ຽງນ້ອຍ, ໝາກພຸກ, ໝາກມີ້, ຜັກກາດຂາວ ແລະ ຜັກສະຫຼັດ), ເຊັນສັນຍາ ກັບ ຣາຊະອານາຈັກໄທ ຈຳນວນ 15 ພືດ (ສາລີ, ແກ່ນສາລີ, ໝາກເລັ່ນ, ຢາສູບແຫ້ງ, ໝາກກ້ຽງ, ໝາກກ້ວຍນ້ຳ, ມັນຝຣັ່ງ, ໝາກຫຸ່ງ, ໝາກໝອດ, ມັນຕົ້ນ, ຖົ່ວດິນ, ໝາກເຍົາ, ໝາກເຜັດ, ໃບຢາສູບແຫ້ງ ແລະ ພືດຜັກສົດຕາມສັນຍາ); ສຳລັບ ການສົ່ງອອກໄປສະຫະພາບເອີຣົບ (EU) ແມ່ນເປີດຮັບທຸກປະເພດສິນຄ້າ ແຕ່ຕ້ອງປະຕິບັດຕາມເງື່ອນໄຂການນຳເຂົ້າຂອງສະຫະພາບເອີຣົບ ແລະ ບັນດາພືດທ່າແຮງອື່ນໆ ແມ່ນນິມິດໝາຍທີ່ສຳຄັນ ໃນການຍູ້ດັນການພັດທະນາຂະແໜງການກະສິກຳ ຊຶ່ງຈະເຮັດໃຫ້ຜະລິດຕະພັນກະສິກຳຂອງ ສປປ ລາວ ມີໂອກາດເຂົ້າເຖິງຕະຫຼາດພາກພື້ນ ແລະ ສາກົນຫຼາຍຂຶ້ນ.

## 2.2. ທ່າແຮງພື້ນຖານ

**ດ້ານປະຊາກອນ:** ປະຊາກອນຂອງໂລກ (ປີ 2020) ມີປະມານ 7,3 ຕື້ຄົນ, ໃນນັ້ນປະມານ 925 ລ້ານຄົນ ຍັງຕ້ອງການອາຫານເພີ່ມ ແລະ ທ່າອ່ຽງຂອງປະຊາກອນໂລກ ຈະເພີ່ມຂຶ້ນເຖິງ 8,5 ຕື້ຄົນ ໃນປີ 2030, ໃນເວລາດຽວກັນປະຊາກອນທີ່ອຶດຫິວແມ່ນຍັງເພີ່ມຂຶ້ນ. ສຳລັບ ປະຊາກອນ ຂອງ ສປປ ລາວ ໃນປີ 2021 ມີປະມານ 7,4 ລ້ານຄົນ , ຄາດຄະເນຮອດປີ 2025 ປະມານ 8,3 ລ້ານຄົນ; ໃນນີ້ບໍ່ລວມຈຳນວນນັກທ່ອງທ່ຽວທີ່ເຂົ້າມາລາວໃນແຕ່ລະປີ ປະມານ 3 ລ້ານເທື່ອຄົນ.

ເພື່ອຮອງຮັບການເຕີບໂຕຂອງປະຊາກອນດັ່ງກ່າວ, ອົງການອາຫານ ແລະ ການກະເສດ (FAO) ໄດ້ປະເມີນຄວາມຕ້ອງການ ແລະ ໄດ້ຮຽກຮ້ອງໃຫ້ບັນດາປະເທດໃນທົ່ວໂລກ ຕ້ອງເພີ່ມປະລິມານການຜະລິດສະບຽງອາຫານທີ່ມີໃນປັດຈຸບັນຂຶ້ນອີກ ໃຫ້ໄດ້ 60%.

**ດ້ານພູມອາກາດ:** ສປປ ລາວຕັ້ງຢູ່ແຫຼມອິນດູຈີນ ທີ່ມີພູມອາກາດເຂດມໍລະສຸມຮ້ອນຊຸ່ມ ມີ 2 ລະດູ ຄື: ລະດູຝົນ (ເລີ່ມແຕ່ເດືອນພຶດສະພາ ຫາ ເດືອນ ຕຸລາ) ແລະ ລະດູແລ້ງ (ເລີ່ມແຕ່ເດືອນ ພະຈິກ ຫາເດືອນ ເມສາ) ອຸນຫະພູມສະເລ່ຍ ຕໍ່າສຸດ 5 $^{o}$C, ອຸນຫະພູມສະເລ່ຍສູງສຸດ 40 $^{o}$C. ປະລິມານນໍ້າຝົນສະເລ່ຍຕໍ່ປີແມ່ນມີຄວາມແຕກຕ່າງກັນໃນແຕ່ລະເຂດ ເຊັ່ນ: ເມືອງ ປາກຊ່ອງ, ແຂວງ ຈໍາປາສັກ 3.700 ມມ, ສະຫວັນນະເຂດ 1.440 ມມ, ວຽງຈັນ 1.700 ມມ ແລະ ຫຼວງພະບາງ 1.360 ມມ ເຊິ່ງນໍ້າຝົນແມ່ນແຫຼ່ງຊຸ່ມຊື່ນຕົ້ນຕໍຂອງປະເທດ.

**ດ້ານແຫຼ່ງນໍ້າ:** ສປປ ລາວ ມີທ່າແຮງດ້ານແຫຼ່ງນໍ້າເປັນຈໍານວນຫຼວງຫຼາຍ, ນອກຈາກນໍ້າຝົນແລ້ວຍັງມີແມ່ນໍ້າຂອງ, ສາຂາແມ່ນໍ້າຕ່າງໆ, ອ່າງເກັບນໍ້າຂອງເຂື່ອນໄຟຟ້ານໍ້າຕົກ ແລະ ມີຊົນລະປະທານ ຈໍານວນ 15.119 ໂຄງການ ເຊິ່ງສາມາດສະໜອງນໍ້າໃຫ້ແກ່ ການປູກເຂົ້າ ແລະ ປູກພືດເປັນສິນຄ້າໄດ້ປະມານ 280.800 ເຮັກຕາ.

**ດ້ານເນື້ອທີ່:** ສປປ ລາວ ມີເນື້ອທີ່ດິນທັງໝົດ 23.680.000 ເຮັກຕາ ເຊິ່ງໄດ້ແບ່ງເປັນທີ່ດິນສະຫງວນ ເພື່ອເປັນເນື້ອທີ່ປ່າໄມ້ປົກຫຸ້ມ 70 ສ່ວນຮ້ອຍ ລວມທັງ ທີ່ດິນບໍລິເວນນ້ຳ ທີ່ນອນໃນເຂດພື້ນທີ່ດັ່ງກ່າວ (ເນື້ອທີ່ດິນປ່າສະຫງວນ 4,7 ລ້ານເຮັກຕາ, ເນື້ອທີ່ດິນປ່າປ້ອງກັນ 8,2 ລ້ານເຮັກຕາ, ເນື້ອທີ່ດິນປ່າຜະລິດ 3,1 ລ້ານເຮັກຕາ ແລະ ເນື້ອທີ່ດິນປູກໄມ້ອຸດສາຫະກໍາ 0,5 ລ້ານເຮັກຕາ) ແລະ ໄດ້ກໍານົດທີ່ດິນເພື່ອການນໍາໃຊ້ ແລະ ພັດທະນາ 30 ສ່ວນຮ້ອຍ ລວມທັງ ທີ່ດິນບໍລິເວນນໍ້າ ທີ່ນອນໃນເຂດພື້ນທີ່ດັ່ງກ່າວ (ທີ່ດິນກະສິກໍາ 4,5 ລ້ານເຮັກຕາ, ທີ່ດິນນາ 2,0 ລ້ານເຮັກຕາ, ທີ່ດິນສໍາລັບປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ 1,0 ລ້ານ

ເຮັກຕາ, ທີ່ດິນປູກໄມ້ໃຫ້ໝາກ 0,8 ລ້ານເຮັກຕາ, ທີ່ດິນທົ່ງຫຍ້າລ້ຽງສັດ 0,7 ລ້ານເຮັກຕາ), ທີ່ດິນປຸກສ້າງ ແລະ ນໍາໃຊ້ເຂົ້າໃນຂະແໜງການອື່ນ 2,56 ລ້ານເຮັກຕາ (ທີ່ດິນປຸກສ້າງ 0,37 ລ້ານເຮັກຕາ, ທີ່ດິນຄົມມະນາຄົມ 0,18 ລ້ານເຮັກຕາ ແລະ ທີ່ດິນປະເພດອື່ນ 2,05 ລ້ານເຮັກຕາ).

**ດ້ານແຮງງານ:** ສປປ ລາວ ມີທ່າແຮງດ້ານແຮງງານກະສິກໍາ ເຊິ່ງກວມ 61,5% ຂອງແຮງງານລາວທົ່ວປະເທດ ເຊິ່ງແຮງງານດ້ານກະສິກໍາແມ່ນມີມູນເຊື້ອອັນດຸໜັ່ນ, ມີພື້ນຖານດ້ານການຜະລິດກະສິກໍາມາດົນນານ ແລະ ອາໄສຢູ່ເປັນຫົວໜ່ວຍຄອບຄົວ ພ້ອມດຽວກັນນັ້ນ ຄ່າແຮງງານກໍ່ຍັງຖືວ່າມີລາຄາຕໍ່າ ເຊິ່ງເປັນຜົນດີໃຫ້ແກ່ການຊ່ວຍຫຼຸດຜ່ອນຕົ້ນທຶນການຜະລິດ.

## 2.3. ທ່າແຮງດ້ານປັດໄຈການຜະລິດ

**ດ້ານແນວພັນ:** ສປປ ລາວ ມີແນວພັນເຂົ້າພື້ນເມືອງທີ່ເກັບຮັກສາໄວ້ໃນທະນາຄານເຊື້ອພັນປະມານ14 ພັນຕົວຢ່າງ ເຊິ່ງແນວພັນເຫຼົ່ານີ້ສ່ວນໃຫຍ່ຈະມີລັກສະນະທົນທານຕໍ່ກັບພະຍາດ ແລະ ແມງໄມ້ສັດຕູພືດ, ມີຄວາມຫອມ, ມີສານອາຫານ ແລະ ສານທີ່ເປັນຢາ ເຊິ່ງມີທ່າແຮງໃນການສຶກສາ ແລະ ນໍາໃຊ້ໂດຍກົງໃນອານາຄົດ. ນອກນີ້ ຍັງມີແນວພັນເຂົ້າທີ່ໄດ້ປັບປຸງຂຶ້ນມາໃໝ່ ທີ່ທົນທານຕໍ່ກັບການປ່ຽນແປງຂອງສະພາບແວດລ້ອມ ເຊັ່ນ: ທົນນໍ້າຖ້ວມ, ທົນໄພແຫ້ງແລ້ງ, ທົນທານຕໍ່ກັບພະຍາດ ແລະ ມີຄວາມຫອມ ເຊິ່ງສາມາດຂະຫຍາຍສູ່ພື້ນຖານການຜະລິດໃຫ້ຊາວນາໄດ້ນໍາໃຊ້ ເພື່ອບັນເທົາຜົນເສຍຫາຍທີ່ອາດເກີດຈາກການປ່ຽນແປງຂອງສະພາບແວດລ້ອມ. ນອກນັ້ນ, ຍັງມີແນວພັນ ສາລີ, ມັນຕົ້ນ, ຖົ່ວ, ພືດຜັກ ແລະ ພືດອື່ນໆ ຊຶ່ງຈະເປັນເງື່ອນໄຂອັນດີໃຫ້ແກ່

ການພັດທະນາແນວພັນໃໝ່ ໃຫ້ທັງຜົນຜະລິດສູງ ແລະ ທົນທານຕໍ່ສະພາບແວດລ້ອມ.

**ດ້ານຝຸ່ນ ແລະ ຢາປາບສັດຕູພືດ:** ສປປ ລາວ ມີທ່າແຮງດ້ານວັດຖຸດິບຈາກແຫຼ່ງທຳມະຊາດ ແລະ ສິ່ງເສດເຫຼືອຈາກການຜະລິດກະສິກຳ ໃນການສົ່ງເສີມໃຫ້ຊາວກະສິກອນ ສາມາດຜະລິດຝຸ່ນ ແລະ ຢາປາບສັດຕູພືດຊີວະພາບ, ນອກນີ້ ຍັງມີບັນດາໂຮງງານຜະລິດຝຸ່ນເຄມີ, ຝຸ່ນຊີວະພາບ ແລະ ຝຸ່ນອິງຄະທາດ ເຊິ່ງສາມາດຜະລິດໄດ້ໂດຍພື້ນຖານ, ເຊິ່ງເປັນເງື່ອນໄຂ ໃນການປັບປຸງລະບົບການຜະລິດຝຸ່ນ ໃຫ້ໄດ້ປະລິມານ ແລະ ຄຸນນະພາບ. ນອກນີ້, ຍັງມີການນຳໃຊ້ເຕັກນິກການປ້ອງກັນ ແລະ ກຳຈັດສັດຕູພືດແບບປະສົມປະສານ (IPM), ມີນິຕິກຳໃນການຄຸ້ມຄອງລະບົບການກວດກາ ແລະ ຂຶ້ນທະບຽນເຄມີກະສິກຳ ທີ່ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າປັດໄຈການຜະລິດ ທີ່ບໍ່ສາມາດຜະລິດເອງໄດ້.

## 2.4. ທ່າແຮງດ້ານ ຕະຫຼາດພືດ ແລະ ຜະລິດຕະພັນພືດ

ໃນປັດຈຸບັນ ຕະຫຼາດພືດ ແລະ ຜະລິດຕະພັນພືດ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຄວາມຕ້ອງການບໍລິໂພກພືດ ແລະ ຜະລິດຕະພັນພືດ ຢູ່ພາຍໃນນັບມື້ນັບເພີ່ມຂຶ້ນ, ມີຕະຫຼາດຂາຍຍົກ, ຂາຍຍ່ອຍ, ຕະຫຼາດກະສິກຳສະອາດ (ກະສິກຳອິນຊີ ແລະ ກະສິກຳທີ່ດີ), ຕະຫຼາດຊຸມຊົນ, ມີຫ້າງຮ້ານຂາຍຜົນຜະລິດພືດ ແລະ ຜະລິດຕະພັນພືດ ເພີ່ມຂຶ້ນ ສາມາດສະໜອງໃຫ້ແກ່ຜູ້ບໍລິໂພກພາຍໃນ ແລະ ນັກທ່ອງທ່ຽວ. ນອກຈາກນີ້ເຮົາຍັງສາມາດເຂົ້າເຖິງບັນດາຕະຫຼາດສົ່ງອອກ ທີ່ໄດ້ສຳເລັດການເຈລະຈາເຕັກນິກເປີດຕະຫຼາດ ເຊັ່ນ: ສປ ຈີນ, ສສ ຫວຽດນາມ, ໄທ, ສະຫະພາບເອີຣົບ ແລະ ປະເທດຄູ່ຄ້າອື່ນໆ. ເຖິງຢ່າງໃດກໍຕາມ ການເຂົ້າເຖິງຕະຫຼາດຂອງບັນດາປະເທດຄູ່ຄ້າ ຍັງມີຄວາມຫຍຸ້ງຍາກ

ເນື່ອງຈາກວ່າ ຄຸນນະພາບຂອງພືດ ແລະ ຜະລິດຕະພັນພືດ ຍັງບໍ່ທັນໄດ້ມາດຕະຖານ ຂອງປະເທດຄູ່ຄ້າ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງລະບົບການຜະລິດ, ການປຸງແຕ່ງພືດ ແລະ ຜະລິດຕະພັນພືດ ໃຫ້ໄດ້ມາດຕະຖານ ພ້ອມທັງເຈລະຈາເຕັກນິກເປີດຕະຫຼາດກັບປະເທດຄູ່ຄ້າ ໃຫ້ໄດ້ຫຼາຍຂຶ້ນ.

## 2.5. ທ່າແຮງດ້ານນະໂຍບາຍຂອງລັດ ໃນການສົ່ງເສີມການລົງທຶນດ້ານການປູກຝັງ

ລັດ ສົ່ງເສີມການລົງທຶນທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສະໜັບສະໜູນດ້ານການຄຸ້ມຄອງການລົງທຶນດ້ານການປູກຝັງ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກຕ່າງໆ. ການປະຕິບັດຄວາມສະເໝີພາບລວມທັງ ການຮັບຮູ້, ການປົກປ້ອງກຳມະສິດ, ການນຳໃຊ້ ແລະ ສິດອື່ນໆ ທີ່ກົດໝາຍກຳນົດໄວ້ ພ້ອມນີ້ ສປປ ລາວ ແມ່ນໄດ້ຮັບສິດທິພິເສດດ້ານພາສີອາກອນ ໃນຖານະປະເທດດ້ອຍພັດທະນາ (LDC) ນຳຫຼາຍກອບ ແລະ ຫຼາຍປະເທດ.

ລັດ ສົ່ງເສີມ ໃຫ້ຊາວກະສິກອນ ແລະ ຜູ້ປະກອບການ ເຂົ້າເຖິງແຫຼ່ງເງິນກູ້ ສຳລັບ ການປູກພືດ ດ້ວຍຫຼາຍຮູບແບບ ເປັນຕົ້ນ ກອງທຶນເພື່ອຜູ້ຜະລິດຂະໜາດກາງ ແລະ ຂະໜາດນ້ອຍ. ໃນນີ້ ກົດໝາຍດ້ານທຸລະກິດ ແລະ ການເງິນ ກໍໄດ້ກຳນົດໃຫ້ມີນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນພາສີອາກອນ ໃຫ້ແກ່ການນຳເຂົ້າປັດໄຈການຜະລິດ ແລະ ອຸປະກອນເຄື່ອງມືຕ່າງໆສຳລັບການປູກພືດ, ນອກຈາກນັ້ນ ລັດຖະບານຍັງມີນະໂຍບາຍ ເປີດກວ້າງໃຫ້ມີຫຼາຍພາກສ່ວນເສດຖະກິດເຂົ້າຮ່ວມໂດຍການນຳໃຊ້ກົນໄກການມີສ່ວນຮ່ວມລະຫວ່າງພາກລັດ ແລະ ຜູ້

ປະກອບການ (PPP) ຕາມກົນໄກເສດຖະກິດການຕະຫຼາດ ໂດຍມີການຄຸ້ມຄອງຂອງລັດ.

## 2.6. ທ່າແຮງດ້ານໂຄງລ່າງພື້ນຖານວັດຖຸເຕັກນິກ

ສປປ ລາວ ມີໂຄງລ່າງຊົນລະປະທານ ເພື່ອຮັບປະກັນການສະໜອງນໍ້າ ໃຫ້ແກ່ພື້ນທີ່ການຜະລິດເຂົ້າ ແລະ ພືດສະບຽງອາຫານ ແລະ ພືດສິນຄ້າ ເຮັດໃຫ້ຜົນຜະລິດລວມຕໍ່ປີເພີ່ມຂຶ້ນຢ່າງຕໍ່ເນື່ອງ. ນອກຈາກນັ້ນ ຍັງມີພື້ນຖານວັດຖຸເຕັກນິກ ໃນການກວດກາ, ວິໄຈສັດຕູພືດ, ຄຸນນະພາບຜະລິດຕະພັນພືດ, ປັດໄຈການຜະລິດ, ກວດສອບສານເຄມີຕົກຄ້າງ ແລະ ອື່ນໆ, ພ້ອມທັງມີຕາໜ່າງປ້ອງກັນ ແລະ ຄວບຄຸມການລະບາດຂອງສັດຕູພືດ ນັບມື້ນັບໄດ້ຮັບການພັດທະນາ.

## 2.7. ທ່າແຮງທາງດ້ານຄົມມະນາຄົມ

ສປປ ລາວ ມີເສັ້ນທາງເຊື່ອມຈອດແຕ່ເໜືອຮອດໃຕ້ ແຕ່ທິດຕາເວັນອອກຫາທິດຕາເວັນຕົກ ແຕ່ໃນເມືອງໄປຫາຊົນນະບົດ, ມີສະໜາມບິນພາຍໃນປະເທດທີ່ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ມີການນໍາໃຊ້ລະບົບທາງລົດໄຟ ລາວ-ຈີນ ທີ່ສາມາດເຊື່ອມຕໍ່ຈາກ ສປປ ລາວ ໄປສູ່ຫຼາຍປະເທດ ຊຶ່ງສ້າງເງື່ອນໄຂສະດວກໃຫ້ແກ່ການສະໜອງປັດໄຈການຜະລິດ, ການຂົນສົ່ງພືດ ແລະ ຜະລິດຕະພັດພືດ ໄດ້ຢ່າງວ່ອງໄວຫຼາຍຂຶ້ນ, ມີດ່ານກັກກັນພືດສາກົນ ທັງໝົດ 28 ດ່ານ ໃນຂອບເຂດທົ່ວປະເທດ ແລະ ຈຸດຄ່ຽນຖ່າຍສິນຄ້າຈໍານວນໜຶ່ງ ເຊິ່ງເປັນການອໍານວຍຄວາມສະດວກ ແລະ ຄຸ້ມຄອງການ ສົ່ງອອກ, ສົ່ງຜ່ານ ແລະ ນໍາເຂົ້າຜະລິດຕະພັນດ້ານການປູກຝັງ ພ້ອມທັງເປັນການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດ ແລະ ແມງໄມ້ສັດຕູພືດ

ຈາກ ສປປ ລາວ ໄປຍັງປະເທດອື່ນ ແລະ ຈາກປະເທດອື່ນເຂົ້າສູ່ ສປປ ລາວ.

### 2.8. ລະບຽບຄຸ້ມຄອງ ແລະ ມາດຕະການດ້ານວິຊາການ

ສປປ ລາວ ມີກົດໝາຍ ວ່າດ້ວຍກະສິກຳ, ກົດໝາຍ ວ່າດ້ວຍການປ້ອງກັນແລະ ການກັກກັນພືດ, ດຳລັດ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ, ດຳລັດ ວ່າດ້ວຍແນວພັນພືດ, ນອກນັ້ນ ຍັງມີຂໍ້ຕົກລົງຕ່າງໆ ເຊັ່ນ: ການຄຸ້ມຄອງຝຸ່ນ, ມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ, ການຄຸ້ມຄອງໂຮງງານປຸງແຕ່ງພືດ, ການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແລະ ນິຕິກຳອື່ນ ທີ່ເປັນເຄື່ອງມືໃຫ້ແກ່ການຄຸ້ມຄອງ, ກວດກາ ແລະ ສະໜັບສະໜູນຜູ້ປະກອບການ ໃນການດຳເນີນທຸລະກິດຢ່າງເປັນທຳ. ການບໍລິການສົ່ງເສີມດ້ານວິຊາການ ກໍ່ຖືກປັບປຸງໃຫ້ວ່ອງໄວທັນສະໄໝຂຶ້ນ, ປັດຈຸບັນ ພວກເຮົາມີພະນັກງານວິຊາການປູກຝັງ ແຕ່ສູນກາງຮອດທ້ອງຖິ່ນ, ມີເຈົ້າໜ້າທີ່ກັກກັນພືດທີ່ປະຈຳຢູ່ດ່ານ, ມີເຈົ້າໜ້າທີ່ກວດຢາປາບສັດຕູພືດ, ມີນັກກວດກາມາດຕະຖານກະສິກຳທີ່ດີ ແລະ ກະສິກຳອິນຊີ ເພື່ອອອກໃບຢັ້ງຢືນ.

## 3. ບັນຫາ

ເຖິງແມ່ນວ່າ ສປປ ລາວ ພວກເຮົາຈະມີຫຼາຍປັດໄຈທີ່ເປັນທ່າແຮງ ແລະ ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການຜະລິດຂອງປະຊາຊົນບັນດາເຜົ່າ ແລະ ຜູ້ປະກອບການຕ່າງໆ ແຕ່ຂອດການຈັດຕັ້ງປະຕິບັດຕົວຈິງກໍ່ຍັງມີຫຼາຍບັນຫາ ດັ່ງນີ້:

## 3.1. ບັນຫາລວມ:

1) ຂະບວນການຜະລິດ, ການປຸງແຕ່ງພືດ ແລະ ຜະລິດຕະພັນພືດ ຂະຫຍາຍຕົວບໍ່ທັນແຂງແຮງ;
2) ປະລິມານ ແລະ ຄຸນນະພາບ ຂອງສິນຄ້າຍັງບໍ່ທັນໄດ້ຕາມມາດຕະຖານ ຂອງປະເທດຄູ່ຄ້າ;
3) ການລົງທຶນຂອງຜູ້ປະກອບການພາຍໃນ ແລະ ຕ່າງປະເທດເຂົ້າໃນຂະແໜງການປູກຝັງ ຍັງບໍ່ທັນຫຼາຍ ຖ້າທຽບໃສ່ຂະແໜງການອື່ນ ໃນຂົງເຂດກະສິກໍາ ແລະ ປ່າໄມ້ ຍັງມີຈໍາກັດຫຼາຍ;
4) ການຈັດສັນ ແລະ ແບ່ງເຂດທີ່ດິນກະສິກໍາ ສໍາລັບ ການປູກພືດແຕ່ລະຊະນິດຍັງບໍ່ທັນສໍາເລັດ;
5) ການຮ່ວມມືປະສານງານ ລະຫວ່າງ ພາກລັດ ແລະ ພາກທຸລະກິດ ໃນການຈັດຕັ້ງປະຕິບັດວຽກງານ, ການຄຸ້ມຄອງ, ການວາງແຜນຄວາມຕ້ອງການ ແລະ ສົ່ງເສີມການຜະລິດ, ການປຸງແຕ່ງ ແລະ ຕະຫຼາດຈໍາໜ່າຍ ຍັງບໍ່ທັນກົມກຽວກັນ;
6) ໂຄງລ່າງພື້ນຖານ ແລະ ຫ້ອງວິໄຈ ທີ່ຮັບໃຊ້ເຂົ້າໃນວຽກງານປູກຝັງ ຍັງບໍ່ທັນໄດ້ຮັບການຍົກລະດັບຕາມມາດຕະຖານສາກົນ;
7) ການກວດກາ ແລະ ຢັ້ງຢືນດ້ານ ສຸຂານາໄມ ແລະ ສຸຂານາໄມພືດ ຍັງເຮັດບໍ່ທັນເຮັດໄດ້ດີເທົ່າທີ່ຄວນ;
8) ການຈັດຕັ້ງກຸ່ມ ຫຼື ສະຫະກອນ ຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ ຜູ້ຜະລິດຈຶ່ງບໍ່ສາມາດຕໍ່ລອງ ກັບພາກການຄ້າ ຫຼື ເຂົ້າເຖິງນະໂຍບາຍ ຈາກພາກລັດໄດ້ຢ່າງເຕັມສ່ວນ;

9) ການສ້າງບຸກຄະລາກອນໃຫ້ກາຍເປັນນັກວິຊາການສະເພາະດ້ານ, ເຈົ້າໜ້າທີ່ກັກກັນພືດ, ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ແລະ ນັກກວດກາມາດຕະຖານ ຍັງບໍ່ທັນພຽງພໍ ແລະ ປະສົບການຍັງມີຈຳກັດ;

10) ການນຳໃຊ້ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທີ່ສະອາດ ແລະ ທັນສະໄໝ ເຂົ້າໃນການຜະລິດ ແລະ ການປຸງແຕ່ງພືດ ຍັງຈຳກັດ; ຄ່ານຳໃຊ້ກະແສໄຟຟ້າ ຍັງສູງ.

## 3.2. ບັນຫາຂອງຊາວກະສິກອນ ແລະ ຜູ້ປະກອບການ

1) ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕ່ຳ ຈາກສະຖາບັນການເງິນ, ກອງທຶນສົ່ງເສີມຈຸນລະວິສະຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຫຍຸ້ງຍາກຫຼາຍ, ສ່ວນໃຫຍ່ຍັງນຳໃຊ້ແຫຼ່ງທຶນດອກເບ້ຍສູງ, ໄລຍະກູ້ຢືມສັ້ນ ແລະ ການລົງທຶນແມ່ນນຳໃຊ້ທຶນຂອງ ບຸກຄົນ ແລະ ກຸ່ມ ຊຶ່ງບໍ່ສາມາດຂະຫຍາຍຂະໜາດຂອງການຜະລິດ ກາຍເປັນຟາມຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຕົ້ນທຶນການຜະລິດ;

2) ການນຳໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ມີຄວາມຈຳເປັນນຳໃຊ້ພະລັງງານໄຟຟ້າຫຼາຍຂຶ້ນ ແຕ່ຕ້ອງໄດ້ຮັບພາລະຄ່າໃຊ້ຈ່າຍຄ່າກະແສໄຟຟ້າສູງ ໃນອັດຕາທີ່ແຕກຕ່າງກັນເຮັດໃຫ້ຕົ້ນທຶນສູງຂຶ້ນ;

3) ຕົ້ນທຶນການຜະລິດຂ້ອນຂ້າງສູງ ບໍ່ສາມາດແຂ່ງຂັນກັບຕະຫຼາດພາຍໃນ, ພາກພື້ນ ແລະ ສາກົນ;

4) ຄວາມຮູ້ຄວາມສາມາດໃນການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີໃໝ່ ເຂົ້າໃນການຜະລິດ ແລະ ການປຸງແຕ່ງ ຍັງຈຳກັດ;
5) ຄວາມຮູ້ພື້ນຖານຂອງຊາວກະສິກອນ ແລະ ຜູ້ປະກອບການໃນການຈັດຕັ້ງປະຕິບັດຮູບແບບທຸລະກິດ, ການຕະຫຼາດ ແລະ ການເຂົ້າເຖິງທາງດ້ານວິຊາການຕ່າງໆໃຫ້ມີຄວາມຍືນຍົງ ແລະ ມີປະສິດທິພາບ ຍັງຈຳກັດ;
6) ຊາວກະສິກອນບາງເຂດແຄວ້ນ ບໍ່ສາມາດເຮັດການຜະລິດໄດ້ຕະຫຼອດປີ.

### 3.3. ບັນຫາດ້ານການຕະຫຼາດ ແລະ ລາຄາ

1) ການເຈລະຈາເຕັກນິກເປີດຕະຫຼາດສິ່ງອອກ ພືດ ແລະ ຜະລິດຕະພັນພືດ ທີ່ມີທ່າແຮງ ກັບບັນດາປະເທດ ພາກພື້ນ ແລະ ສາກົນ ຍັງໄດ້ໜ້ອຍ, ກົງກັນຂ້າມ ການຄຸ້ມຄອງການນຳເຂົ້າ ພືດ ແລະ ຜະລິດຕະພັນພືດ ຍັງບໍ່ທັນເຂັ້ມງວດ;

2) ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມຂໍ້ກຳນົດເງື່ອນໄຂຕ່າງໆ ທີ່ ສປປ ລາວ ໄດ້ເຊັນຮ່ວມກັບປະເທດຄູ່ຄ້າ ຍັງບໍ່ທັນໄດ້ດີ;

3) ກົນໄກການຄຸ້ມຄອງຕະຫຼາດ ແລະ ລາຄາ ພືດ ແລະ ຜະລິດຕະພັນພືດ ຢູ່ພາຍໃນ ຍັງບໍ່ທັນໄດ້ດີ ແລະ ແທດເໝາະກັບຄວາມເປັນຈິງ, ຕະຫຼາດ ຍັງບໍ່ໝັ້ນຄົງ ແລະ ລາຄາຍັງມີການເໜັງຕີງຫຼາຍ;

4) ການສົ່ງອອກພືດ ສ່ວນໃຫຍ່ແມ່ນເປັນວັດຖຸດິບ ຍັງບໍ່ທັນໄດ້ປຸງແຕ່ງເພື່ອສ້າງມູນຄ່າເພີ່ມຢູ່ພາຍໃນປະເທດໃຫ້ຫຼາຍເທົ່າທີ່ຄວນ;
5) ການຄໍ້າປະກັນ ຫຼື ແຊກແຊງລາຄາຜົນຜະລິດ ໃຫ້ຜູ້ຜະລິດ ແລະ ຜູ້ປະກອບການ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດເປັນຮູບປະທໍາ;
6) ຂໍ້ມູນຂ່າວສານ, ການສຶກສາ, ຕິດຕາມໂຄງສ້າງຕົ້ນທຶນການຜະລິດ, ການຕະຫຼາດ ແລະ ຄຸ້ມຄອງລາຄາ ຍັງບໍ່ທັນໄດ້ພັດທະນາເທົ່າທີ່ຄວນ;
7) ການເກັບ ຄ່າທໍານຽມ ແລະ ຄ່າບໍລິການ ຍັງມີລັກສະນະຊໍ້າຊ້ອນ ແລະ ບໍ່ເປັນເອກະພາບກັນ ເຊັ່ນ: ເກັບຈາກຜູ້ປູກ, ຈາກຜູ້ເກັບຊື້ ແລະ ຜູ້ຂົນສົ່ງ ຊຶ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ຕົ້ນທຶນການຜະລິດສູງ.

## 4. ກາລະໂອກາດຂອງ ສປປ ລາວ

ເຖິງແມ່ນວ່າ ສປປ ລາວ ຈະມີບັນຫາ ແລະ ຂໍ້ຈໍາກັດ ດັ່ງທີ່ກ່າວມາກໍ່ຕາມ ແຕ່ກໍ່ຍັງມີກາລະໂອກາດ ໃນການພັດທະນາຂະແໜງການປູກຝັງ ເພື່ອຜະລິດເປັນສະບຽງອາຫານ, ສິນຄ້າພາຍໃນ ແລະ ສົ່ງອອກ ດັ່ງນີ້:

1) ພັກ ແລະ ລັດຖະບານ ໄດ້ມີແນວທາງນະໂຍບາຍທີ່ຖືກຕ້ອງ, ມີນິຕິກໍາຮອງຮັບ ແລະ ໄດ້ກໍານົດຍຸດທະສາດການພັດທະນາທີ່ສອດຄ່ອງ ໂດຍສົ່ງເສີມ ແລະ ອໍານວຍຄວາມສະດວກໃຫ້ທຸກພາກສ່ວນເສດຖະກິດ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ;
2) ຕະຫຼາດ ແລະ ຄວາມຕ້ອງການຜົນຜະລິດ ພືດ ແລະ ຜະລິດຕະພັນພືດ ຢູ່ພາຍໃນປະເທດ, ປະເທດໃກ້ຄຽງ ແລະ ປະເທດຄູ່ຄ້າ ຍັງມີສູງ;

3) ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ, ການປະຕິບັດສັນຍາ ແລະ ສົນທິສັນຍາ ພາກພື້ນ ແລະ ສາກົນ ເຂດການຄ້າເສລີອາຊຽນ ແລະ ອາຊຽນ+3 ເຮັດໃຫ້ ສປປ ລາວ ມີໂອກາດພັດທະນາມາດຕະຖານສິນຄ້າ ພືດ ແລະ ຜະລິດຕະພັນພືດ ໃນການເຂົ້າເຖິງຕະຫຼາດພາກພື້ນ ແລະ ສາກົນ ທີ່ມີມູນຄ່າສູງ;
4) ການເປີດການນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ເຊິ່ງເປັນທາງເລືອກໜຶ່ງທີ່ສຳຄັນໃນການຂົນສົ່ງສິນຄ້າ ຂອງ ສປປ ລາວ ໄປຍັງບັນດາປະເທດພາກພື້ນ ແລະ ສາກົນ.

## 5. ສິ່ງທ້າທາຍ

ສປປ ລາວ ຍັງຈະປະເຊີນກັບສິ່ງທ້າທາຍ ແລະ ໄພຂົ່ມຂູ່ຈຳນວນໜຶ່ງທີ່ຈະຕ້ອງໄດ້ຕິດຕາມ ແລະ ຄວບຄຸມ ດັ່ງນີ້:

1) ສະພາບການຂອງໂລກ ມີການຜັນແປທາງດ້ານເສດຖະກິດ, ອັດຕາເງິນເຟີ້, ລາຄານ້ຳມັນສູງ ສົ່ງຜົນໃຫ້ລາຄາປັດໄຈການຜະລິດເປັນຕົ້ນ ເຄື່ອງມືກະສິກຳ, ແນວພັນພືດ, ຝຸ່ນ, ຢາປາບສັດຕູພືດ, ຄ່າແຮງງານ ມີແນວໂນ້ມເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຮັດໃຫ້ໂຄງປະກອບຕົ້ນທຶນການຜະລິດສູງຂຶ້ນ;
2) ການປ່ຽນແປງດິນຟ້າອາກາດ ໄດ້ສົ່ງຜົນໃຫ້ເກີດມີໄພພິບັດທາງທຳມະຊາດ ແລະ ການລະບາດຂອງສັດຕູພືດ ເຮັດໃຫ້ການຜະລິດພືດສະບຽງອາຫານ ແລະ ພືດຜະລິດເປັນສິນຄ້າ ບໍ່ໄດ້ຕາມຄາດໝາຍ;
3) ການພັດທະນາຕ່ອງໂສ້ການຜະລິດ ຕິດພັນກັບການປຸງແຕ່ງພືດ ແລະ ຜະລິດຕະພັນພືດ ຕ້ອງໄດ້ເຮັດຢ່າງຄົບຊຸດ, ເວົ້າລວມທັງພາກລັດ ແລະ ເອກະຊົນ ຍັງຂາດເຂີນງົບປະມານໃນການລົງທຶນ;
4) ໂຄງລ່າງພື້ນຖານດ້ານຄົມມະນາຄົມຂົນສົ່ງສິນຄ້າກະສິກຳ ລະຫວ່າງເມືອງຕໍ່ເມືອງ, ແຂວງຕໍ່ແຂວງ ຍັງມີຄວາມຫຍຸ້ງຍາກ;

5) ການນຳເຂົ້າ ແລະ ການສົ່ງຜ່ານພືດ ແລະ ໝາກໄມ້ ຍັງມີຄວາມສ່ຽງຕໍ່ການເກີດການລະບາດຂອງພະຍາດ ແລະ ສັດຕູພືດ;
6) ພະນັກງານວິຊາການ ທີ່ມີຄວາມຊຳນິຊຳນານສະເພາະດ້ານ ຍັງຈຳກັດ, ຂາດອຸປະກອນທີ່ທັນສະໄໝ, ການນຳໃຊ້ເຄື່ອງມືອຸປະກອນຍັງບໍ່ແທດເໝາະກັບວຽກງານ;
7) ການຜະລິດພືດເປັນສິນຄ້າຂອງຊາວກະສິກອນສ່ວນໃຫຍ່ ຜະລິດໃນຮູບແບບດັ່ງເດີມ ມີຄວາມຫຍຸ້ງຍາກ ໃນການຫັນປ່ຽນຮູບແບບການຜະລິດແບບດັ້ງເດີມມາເປັນການຜະລິດແບບໃໝ່ ທີ່ໄດ້ທັງປະລິມານ, ຄຸນນະພາບ ແລະ ມາດຕະຖານ ຕາມຕະຫຼາດທີ່ຕ້ອງການ.

ຈາກຜົນຂອງການວິເຄາະ ສະພາບ, ທ່າແຮງ, ບັນຫາ, ກາລະໂອກາດ ແລະ ສິ່ງທ້າທາຍ ທີ່ໄດ້ກ່າວມາຂ້າງເທິງນັ້ນ ຈຶ່ງເຫັນວ່າ ສປປ ລາວ ຕ້ອງມີນະໂຍບາຍແຫ່ງຊາດໃນການສົ່ງເສີມການປູກພືດ ເປັນສິນຄ້າ, ທັງນີ້ກໍເພື່ອພັດທະນາຂະແໜງການປູກຝັງ ໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນ ສາມາດປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນ ເພື່ອຫຼຸດພົ້ນຄວາມທຸກຍາກເທື່ອລະກ້າວ.

# ພາກທີ II
# ຈຸດປະສົງ, ເປົ້າໝາຍ ແລະ ຂອບເຂດການນຳໃຊ້

## 1. ຈຸດປະສົງ

ນະໂຍບາຍສະບັບນີ້ ກຳນົດຂຶ້ນເພື່ອເປັນແນວທາງຂອງພາກລັດ ໃນການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການພັດທະນາ ຂະ

ແໜງ ການປູກຝັງ ຂອງ ສປປ ລາວ ໃຫ້ມີການຂະຫຍາຍຕົວ ແນໃສ່ຮັບປະກັນດ້ານສະບຽງອາຫານ, ໂພຊະນາການ ແລະ ເປັນສິນຄ້າພາຍໃນ ແລະ ສົ່ງອອກ ຕາມທິດປູກຝັງທັນສະໄໝ, ສະອາດ, ປອດໄພ, ໃສ່ໃຈຄຸນນະພາບ, ໝັ້ນຄົງ, ຍືນຍົງ ແລະ ເປັນສິນຄ້າ.

## 2. ເປົ້າໝາຍ

ນະໂຍບາຍສະບັບນີ້ ໄດ້ກຳນົດເປົ້າໝາຍຜົນປະໂຫຍດທີ່ຈະໄດ້ຮັບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ແຕ່ນີ້ຮອດ ປີ 2030 ດັ່ງນີ້:

### 2.1. ເປົ້າໝາຍທາງດ້ານເສດຖະກິດ

ສູ້ຊົນການຜະລິດເຂົ້າ ໃຫ້ໄດ້ 4 ລ້ານໂຕນ, ການຜະລິດພືດສະບຽງອາຫານ ແລະ ການຜະລິດເປັນສິນຄ້າ ໃຫ້ໄດ້ 10 ລ້ານກວ່າໂຕນ ໃນນັ້ນ ພືດສະບຽງ 2,5 ລ້ານກວ່າໂຕນ (ການຜະລິດສາລີຫວານ 190.000 ໂຕນ, ເຜືອກມັນ 250.000 ໂຕນ, ປະເພດໝາກໄມ້ 550.000 ໂຕນ ແລະ ພືດຜັກ 1,60 ລ້ານໂຕນ ແລະ ອື່ນໆ) ແລະ ພືດສິນຄ້າ ໃຫ້ໄດ້ 7,5 ລ້ານກວ່າໂຕນ (ສາລີແຂງ 600.000 ໂຕນ, ກາເຟ 200.000 ໂຕນ, ອ້ອຍ 1,4 ລ້ານໂຕນ, ມັນຕົ້ນ 4 ລ້ານໂຕນ, ຢາສູບ 35.000 ໂຕນ, ໝາກເດືອຍ ສະເລ່ຍ 200.000 ໂຕນ, ໝາກກ້ວຍ ສະເລ່ຍ 800.000 ໂຕນ, ໝາກໂມ 200.000 ໂຕນ ແລະ ອື່ນໆ), ຄາດຄະເນມູນຄ່າການສົ່ງອອກພືດ ແລະ ຜະລິດຕະພັນພືດ ຮອດປີ 2030 ບໍ່ໃຫ້ຫຼຸດ 1,5 ຕື້ໂດລາສະຫະລັດ.

### 2.2. ເປົ້າໝາຍທາງດ້ານສັງຄົມ

ນະໂຍບາຍສະບັບນີ້ຄາດວ່າຈະມີຜົນປະໂຫຍດທາງດ້ານສັງຄົມ ເປັນຕົ້ນ ສ້າງອາຊີບ, ວຽກເຮັດງານທຳ ໃຫ້ມີລາຍຮັບ ແລະ ເຮັດໃຫ້

ຊີວິດການເປັນຢູ່ທີ່ດີຂຶ້ນ, ຍົກລະດັບສີມືແຮງງານ, ສ້າງຄວາມຊຳນານໃນການຄຸ້ມຄອງ, ບໍລິຫານ ແລະ ບໍລິການກິດຈະການ ດ້ານການປູກຝັງ, ຫຼຸດຜ່ອນການຫຼັ່ງໄຫຼເຂົ້າມາເຮັດວຽກໃນຕົວເມືອງ ແລະ ປະເທດເພື່ອນບ້ານ ຂອງຊາວໜຸ່ມ; ສົ່ງຜົນໃຫ້ສັງຄົມມີຄວາມສະຫງົບ, ອຸ່ນອ່ຽງທຸ່ນທ່ຽງ, ປະເທດຊາດມີຄວາມໝັ້ນຄົງ ຈະເລີນສີວິໄລເພີ່ມຂຶ້ນ.

### 2.3. ເປົ້າໝາຍທາງດ້ານສິ່ງແວດລ້ອມ

ນະໂຍບາຍສະບັບນີ້ ຈະເປັນການປະກອບສ່ວນເຂົ້າໃນການສົ່ງເສີມດ້ານສິ່ງແວດລ້ອມ ເປັນຕົ້ນ ການຊຸກຍູ້ ແລະ ຫັນການຜະລິດເຂົ້າສູ່ລະບົບກະສິກຳສະອາດ, ກະສິກຳທີ່ດີ (GAP) ແລະ ກະສິກຳອິນຊີ (OA) ເຊິ່ງຈະນຳໃຊ້ຝຸ່ນອິງຄະທາດ-ຊີວະພາບ ໃນການປັບປຸງບາລຸງດິນເພື່ອປູກພືດ, ການຄຸ້ມຄອງການນຳເຂົ້າ, ການນຳໃຊ້ຝຸ່ນເຄມີ, ຢາປາບສັດຕູພືດ ເຂົ້າສູ່ລະບົບ ແລະ ເຕັກນິກເພີ່ມຂຶ້ນ.

## 3. ຂອບເຂດການນຳໃຊ້

ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ ສະບັບນີ້ ກຳນົດຂຶ້ນມາເພື່ອໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ກຸ່ມ, ສະຫະກອນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານດ້ານການປູກພືດເປັນສິນຄ້າ.

# ພາກທີ III
# ເນື້ອໃນຂອງນະໂຍບາຍສົ່ງເສີມການປູກພືດ

ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ ມີຄວາມສຳຄັນໃນການສ້າງເງື່ອນໄຂໃຫ້ແກ່ຂະແໜງການ ເພື່ອຈັດຕັ້ງປະຕິບັດຄາດໝາຍສູ້ຊົນດ້ານການຜະລິດສະບຽງອາຫານໃຫ້ພຽງພໍ ຕອບສະໜອງໃຫ້ແກ່ການບໍລິໂພກພາຍໃນ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ການຜະລິດເປັນສິນຄ້າສົ່ງອອກ, ສ້າງລາຍຮັບ, ນຳເອົາເງິນຕາເຂົ້າມາປະເທດ ໃຫ້ຫຼາຍຂຶ້ນ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທີ່ ສປປ ລາວ ເປັນພາຄີ. ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ ປະກອບດ້ວຍເນື້ອໃນ 08 ຂໍ້ ດັ່ງນີ້:

## 1. ນະໂຍບາຍທີ່ດິນ ສຳລັບ ການປູກພືດ

**ບັນຫາ:**

1. ການແບ່ງເຂດທີ່ດິນ ສຳລັບ ເປົ້າໝາຍການປູກພືດແຕ່ລະຊະນິດ ຍັງບໍ່ທັນລະອຽດຊັດເຈນ ເຮັດໃຫ້ການວາງແຜນຊຸກຍູ້ຜູ້ປະກອບການ ແລະ ຊາວກະສິກອນ ບໍ່ທັນຖືກນຳໃຊ້ຢ່າງເຕັມສ່ວນ;
2. ປະຊາຊົນ ປູກພືດຕາມຄວາມຕ້ອງການຂອງຕະຫຼາດ ໂດຍບໍ່ຄຳນຶງເຖິງການຫັນປ່ຽນການນຳໃຊ້ທີ່ດິນສຳລັບປູກພືດ ຈະມີທ່າອ່ຽງຈາກການປູກພືດສະບຽງອາຫານ ແລະ ພືດເສດຖະກິດ ໄປສູ່ພືດອຸດສາຫະກຳອື່ນ, ການນຳໃຊ້ທີ່ດິນປູກພືດບໍ່ຖືກຕ້ອງຕາມເປົ້າໝາຍເປັນຕົ້ນ ທີ່ດິນເໝາະສົມສຳລັບການປູກພືດເສດຖະກິດ ຫັນໄປນຳໃຊ້ປະໂຫຍດອື່ນ;
3. ບໍ່ທັນມີນິຕິກຳສະເພາະໃນການຄຸ້ມຄອງທີ່ດິນປູກພືດ ສຳລັບ ການຜະລິດພືດສະບຽງອາຫານ ແລະ ພືດຜະລິດເປັນສິນຄ້າ;

4. ໂຄງການສະໜັບສະໜູນການຄຸ້ມຄອງ ແລະ ພັດທະນາທີ່ດິນປູກພືດ ຍັງມີຈຳກັດ.

**ຈຸດປະສົງ:**

1. ເພື່ອກຳນົດ, ຈັດສັນ ແລະ ແບ່ງເຂດເນື້ອທີ່ດິນກະສິກຳ ໃຫ້ແທດເໝາະກັບ ເງື່ອນໄຂ, ທີ່ຕັ້ງ, ຈຸດພິເສດ, ທ່າແຮງ ແລະ ຂໍ້ໄດ້ປຽບຂອງແຕ່ລະພື້ນທີ່ ໃນການດຳເນີນການຜະລິດ ແລະ ທຸລະກິດດ້ານການປູກພືດ ໃຫ້ເປັນທັນສະໄໝ ຕາມທິດກະສິກຳສະອາດ;
2. ເພື່ອຄຸ້ມຄອງສະຫງວນພື້ນທີ່ປູກພືດ, ຄຸ້ມຄອງການນຳໃຊ້, ການພັດທະນາ ແລະ ປົກປັກຮັກສາ ທີ່ດິນປູກພືດໃນເຂດທີ່ເໝາະສົມພ້ອມທັງ ຊຸກຍູ້ການນຳໃຊ້ທີ່ດິນປູກພືດ ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງສຸດ.

**ນະໂຍບາຍ:**

1. ລັດ ເປັນເຈົ້າການໃນການຄຸ້ມຄອງເນື້ອທີ່ດິນກະສິກຳ ລວມທັງເນື້ອທີ່ດິນປູກພືດ ດ້ວຍການສຳຫຼວດ, ການກຳນົດເຂດ, ວາງແຜນການນຳໃຊ້ເນື້ອທີ່ດິນປູກພືດ ໃຫ້ຖືກຕ້ອງຕາມເປົ້າໝາຍ;
2. ລັດ ສົ່ງເສີມໃຫ້ຜູ້ປະກອບການ ແລະ ຊາວກະສິກອນ ນຳໃຊ້ດິນປູກພືດຕາມທີ່ໄດ້ກຳນົດໄວ້ໃນການຜະລິດພືດສະບຽງອາຫານແລະ ຜະລິດພືດເປັນສິນຄ້າໃຫ້ເກີດປະໂຫຍດສູງສຸດ, ມີຄວາມຍືນຍົງດ້ວຍການລົງທຶນ ແລະ ການນຳໃຊ້ເຕັກນິກທີ່ເໝາະສົມ;
3. ດຳເນີນການຕິດຕາມ, ກວດກາ ການນຳໃຊ້ທີ່ດິນປູກພືດຢ່າງເປັນລະບົບ, ພັດທະນາການຂຶ້ນທະບຽນທີ່ດິນກະສິກຳ ເພື່ອຢັ້ງຢືນສິດນຳໃຊ້ ດ້ວຍການສ້າງ ແລະ ປັບປຸງບັນດານິຕິກຳ ແລະ ອອກບົດແນະນຳທາງດ້ານວິຊາການ ໃນການປັບປຸງບຳລຸງດິນ ສຳລັບ ການປູກພືດແຕ່ລະຊະນິດ;
4. ລັດ ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກຳ, ລະບຽບການຄຸ້ມຄອງນຳໃຊ້ເນື້ອທີ່ດິນກະສິກຳ ລວມທັງ ເນື້ອທີ່ດິນປູກພືດ ເພື່ອຮັບປະກັນ

ຄວາມໝັ້ນຄົງທາງດ້ານສະບຽງອາຫານ ໂດຍເພີ່ມສະມັດຕະພາບຂອງການຜະລິດພືດໃຫ້ສູງຂຶ້ນ;

5. ພື້ນທີ່ການຜະລິດທີ່ໄດ້ຮັບການຢັ້ງຢືນ ຕາມມາດຖານ ກະສິກຳທີ່ດີ ແລະ ກະສິກຳອິນຊີ ຕິດຕໍ່ກັນ ໃນໄລຍະ 03 ປີ ຈະໄດ້ຮັບການຄົ້ນຄ້ວາ ນະໂຍບາຍຫຼຸດຜ່ອນພາສີທີ່ດິນ;
6. ລັດ ສົ່ງເສີມໃຫ້ມີການປູກພືດຫຼາຍຮອບວຽນຕໍ່ປີ ໃນເຂດທີ່ມີເງື່ອນໄຂການສະໜອງນ້ຳ ເປັນຕົ້ນ ການຜະລິດເຂົ້າ (ນາປີ ແລະ ນາແຊງ) ຫຼື ພືດຊະນິດອື່ນ ທີ່ມີທ່າແຮງ ໂດຍຜ່ານການສະໜອງແນວພັນ, ຝຸ່ນ,ຢາປາບສັດຕູພືດ, ເຕັກນິກ ແລະ ຄ່ານຳໃຊ້ນ້ຳຊົນລະປະທານ.

## 2. ນະໂຍບາຍປັດໄຈການຜະລິດ

**ບັນຫາ:**

1. ແນວພັນພືດຫຼາຍຊະນິດ ແມ່ນຍັງບໍ່ທັນໄດ້ຄົ້ນຄວ້າ ແລະ ພັດທະນາຢ່າງຄົບຊຸດ, ບໍ່ທັນມີແນວພັນພືດທີ່ດີ, ມີຄຸນນະພາບສະໜອງໃຫ້ສັງຄົມໄດ້ພຽງພໍກັບຄວາມຕ້ອງການ ແລະ ສ່ວນໃຫຍ່ແມ່ນອາໄສນຳເຂົ້າຈາກຕ່າງປະເທດ;
2. ການສະໜອງຝຸ່ນ, ຊະນິດສູດຝຸ່ນ ເຄມີ, ຊີວະພາບ ແລະ ອິງຄະທາດ ຂອງບັນດາໂຮງງານຕ່າງໆ ຢູ່ພາຍໃນປະເທດ ຍັງບໍ່ທັນໄດ້ມາດຕະຖານ, ຮັບປະກັນ ແລະ ສະໜອງໄດ້ຢ່າງພຽງພໍກັບຄວາມຕ້ອງການຊົມໃຊ້ ຂອງຊາວກະສິກອນ ແລະ ບັນດາຜູ້ປະກອບການ ທີ່ຜະລິດພືດສະບຽງອາຫານ ແລະ ຜະລິດພືດສິນຄ້າ ຍັງອາໄສການນຳເຂົ້າຈາກຕ່າງປະເທດເປັນສ່ວນຫຼາຍ;
3. ບໍ່ທັນມີໂຮງງານຜະລິດຢາປາບສັດຕູພືດ, ຢາປາບສັດຕູພືດສ່ວນຫຼາຍແມ່ນນຳເຂົ້າ ຈາກຕ່າງປະເທດ ເພື່ອຮັບໃຊ້ ໃນການປ້ອງກັນ

ແລະ ຄວບຄຸມການລະບາດຂອງສັດຕູພືດ ໃຫ້ທ່ວງທັນກັບສະພາບການ;

4. ການຄຸ້ມຄອງການນຳເຂົ້າ ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ຍັງບໍ່ທັນໄດ້ດີ ແລະ ຍັງມີການລັກລອບນຳເຂົ້າ ບໍ່ຖືກຕາມລະບຽບຫຼັກການທີ່ກົດໝາຍວາງອອກ;
5. ຫ້ອງວິໄຈ ແລະ ກວດກາຄຸນນະພາບ ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ຍັງບໍ່ໄດ້ຮັບການພັດທະນາ ຕາມຄວາມຮຽກຮ້ອງຕ້ອງການ;
6. ບັນຫາລາຄາຝຸ່ນທີ່ຜະລິດພາຍໃນ ຕົ້ນທຶນການຜະລິດຂ້ອນຂ້າງສູງ ແລະ ຝຸ່ນທີ່ນຳເຂົ້າຈາກຕ່າງປະເທດ ມີລາຄາສູງ.

**ຈຸດປະສົງ:**

1. ເພື່ອພັດທະນາ ແລະ ຄົ້ນຄວ້າແນວພັນພືດໃໝ່ ໃຫ້ສາມາດຕອບສະໜອງ ໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການຜະລິດພືດຢ່າງພຽງພໍ;
2. ເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການນຳເຂົ້າ, ຈຳໜ່າຍ ແລະ ການນຳໃຊ້ ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ໃຫ້ຖືກ ຕ້ອງຕາມລະບຽບການ;
3. ເພື່ອປັບປຸງລະບົບການສະໜອງແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ໃຫ້ມີຄຸນນະພາບ, ລາຄາທີ່ເໝາະສົມ ແລະ ພຽງພໍກັບຄວາມຕ້ອງການຂອງຊາວກະສິກອນ ແລະ ຜູ້ປະກອບການ ໄດ້ຢ່າງທົ່ວເຖິງ, ທັນເວລາ ແລະ ມີສ່ວນແຮໄວ້ໃນເວລາເກີດໄພທຳມະຊາດ.

**ນະໂຍບາຍ**

1. ລັດ ສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນສ້າງ ແລະ ດຳເນີນທຸລະກິດດ້ານໂຮງງານຜະລິດຝຸ່ນຊີວະພາບ ແລະ ຝຸ່ນອົງຄະທາດ ດ້ວຍການໃຫ້ນະໂຍບາຍຍົກເວັ້ນພາສີ, ອາກອນໃນ

ການນຳເຂົ້າວັດຖຸອຸປະກອນ ທີ່ກ່ຽວຂ້ອງກັບການສ້າງໂຄງລ່າງພື້ນຖານຂອງໂຮງງານຜະລິດຝຸ່ນ;

2. ລັດ ຊຸກຍູ້, ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ ລົງທຶນໃສ່ໂຄງລ່າງພື້ນຖານໃນການຄົ້ນຄວ້າເຕັກນິກ, ທົດສອບ, ວິໄຈຄຸນນະພາບ ແລະ ມາດຕະຖານແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ;
3. ລັດ ປັບປຸງ, ຍົກລະດັບ ສູນ, ສະຖານີ ທີ່ເປັນບ່ອນຜະລິດ ແລະ ສະໜອງແນວພັນພືດ ໃຫ້ຊາວກະສິກອນ ແລະ ຜູ້ປະກອບການ, ນອກນັ້ນ ຍັງຍົກເວັ້ນພາສີ ສຳລັບ ການນຳເຂົ້າແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ທີ່ບໍ່ມີລັກສະນະການຄ້າ ຫຼື ບໍ່ສາມາດຜະລິດພາຍໃນໄດ້ ເພື່ອຕອບສະໜອງການຜະລິດ, ການສຶກສາ, ຄົ້ນຄວ້າທົດລອງ ແລະ ແກ້ໄຂຈາກຜົນກະທົບໄພພິບັດ;
4. ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ແລະ ພັດທະນາ ເຄື່ອງມືວິໄຈທີ່ຈຳເປັນ ສຳລັບ ການທົດສອບ, ວິໄຈ, ການກວດກາຄຸນນະພາບເມັດພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ.

## 3. ນະໂຍບາຍສົ່ງເສີມດ້ານຄຸນນະພາບ ແລະ ການປຸງແຕ່ງພືດ

**ບັນຫາ:**

1. ການຈັດຕັ້ງກຳລັງການຜະລິດ ເພື່ອສະໜອງວັດຖຸດິບປ້ອນໂຮງງານປຸງແຕ່ງພືດ ຍັງບໍ່ທັນໄດ້ຄຸນນະພາບ, ມາດຕະຖານ ແລະ ບໍ່ພຽງພໍກັບຄວາມຕ້ອງການ;
2. ໂຮງງານປຸງແຕ່ງພືດ ແລະ ຜະລິດຕະພັນພືດ ສ່ວນໃຫຍ່ແມ່ນໂຮງງານຂະໜາດນ້ອຍ, ບໍ່ໄດ້ມາດຕະຖານ ຂອງ ພາກພື້ນ ແລະ ສາກົນ;
3. ການປຸງແຕ່ງ ແລະ ການຕະຫຼາດ ພືດ ແລະ ຜະລິດຕະພັນພືດ ຍັງບໍ່ເຂັ້ມແຂງ ບໍ່ສາມາດແຂ່ງຂັນທາງດ້ານການຄ້າ ໂດຍສະເພາະລາຄາ

ແລະ ມາດຕະຖານຂອງຜະລິດຕະພັນ, ການປະຕິບັດສັນຍາສອງສົ້ນ ລະຫວ່າງ ຜູ້ຜະລິດ ແລະ ຜູ້ປະກອບການ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ;

4. ການລົງທຶນໃສ່ການພັດທະນາໂຄງລ່າງພື້ນຖານວິທະຍາສາດ ເຕັກໂນໂລຊີ, ມາດຕະຖານໂຮງງານ, ຫ້ອງວິໄຈ, ໂຮງເຮືອນປູກພືດ, ໂຮງເຮືອນຫຸ້ມຫໍ່, ລານຕາກ ແລະ ສາງເກັບຮັກສາ ຍັງບໍ່ທັນສູງ ແລະ ບໍ່ໄດ້ມາດຕະຖານ;
5. ການສົ່ງເສີມ ແລະ ພັດທະນາກະສິກຳສະອາດ ບໍ່ທັນກວ້າງຂວາງ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ;
6. ການຄຸ້ມຄອງການລົງທຶນດ້ານການປູກພືດເປັນສິນຄ້າ ຍັງບໍ່ທັນຈັດຕັ້ງປະຕິບັດໄດ້ຢ່າງສອດຄ່ອງ ຕາມ ກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
7. ການຈັດການ, ການນຳໃຊ້ສິ່ງເສດເຫຼືອ ຈາກການປຸງແຕ່ງພືດ ຍັງບໍ່ທັນໄດ້ປະຕິບັດຕາມລະບຽບການ.

**ຈຸດປະສົງ:**

1. ຊຸກຍູ້, ສົ່ງເສີມ ໃຫ້ຜູ້ຜະລິດ, ກຸ່ມ, ສະຫະກອນ, ສະມາຄົມ ແລະ ຜູ້ປະກອບການ ຜະລິດພືດ ໃຫ້ໄດ້ປະລິມານ, ຄຸນນະພາບ ແລະ ມາດຕະຖານ ເພື່ອປ້ອນໂຮງງານປຸງແຕ່ງໃຫ້ພຽງພໍ ແລະ ສົ່ງອອກຕ່າງປະເທດ;
2. ຍົກລະດັບໂຮງງານປຸງແຕ່ງພືດ, ຫ້ອງວິໄຈ, ສາງເກັບຮັກສາ ແລະ ອື່ນໆ ທີ່ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການສົ່ງເສີມການຜະລິດ ແລະ ການປຸງແຕ່ງ ພືດ ແລະ ຜະລິດຕະພັນພືດ ໃຫ້ໄດ້ມາດຕະຖານ.

**ນະໂຍບາຍ:**

1. ລັດ ຊຸກຍູ້, ສົ່ງເສີມ ໃຫ້ຜູ້ປະກອບການ ຜະລິດພືດຕາມຕ່ອງໂສ້ການຜະລິດ ຕິດພັນກັບການປຸງແຕ່ງໃຫ້ໄດ້ມາດຕະຖານ ແລະ

ສາມາດແຂ່ງຂັນທາງດ້ານການຄ້າ ດ້ວຍການຮ່ວມສຳພັນເສດຖະກິດ ລະຫວ່າງ ຜູ້ຜະລິດ, ກຸ່ມ, ສະຫະກອນ ຫຼື ສະມາຄົມ;

2. ລັດ ຊຸກຍູ້, ສົ່ງເສີມ ໃຫ້ທຸກພາກສ່ວນເສດຖະກິດ ລົງທຶນພັດທະນາໂຄງລ່າງພື້ນຖານວິທະຍາສາດເຕັກໂນໂລຊີ, ໂຮງງານປຸງແຕ່ງພືດ, ຫ້ອງວິໄຈຄຸນນະພາບມາດຕະຖານສິນຄ້າພືດ ໃຫ້ເປັນລະບົບ ແລະ ສອດຄ່ອງຕາມມາດຕະຖານຂອງພາກພື້ນ ແລະ ສາກົນ;
3. ລັດ ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ພາກສ່ວນທຸລະກິດລົງທຶນໃສ່ການຜະລິດ ແລະ ການສະໜອງນ້ຳຢ່າງພຽງພໍ ໃຫ້ແກ່ການຜະລິດກະສິກຳສະອາດ ໂດຍນຳໃຊ້ເຕັກໂນໂລຊີ ທີ່ສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ການກວດກາ ແລະ ຢັ້ງຢືນ ຕາມກົດໝາຍ ແລະ ລະບຽບການ;
4. ຊຸກຍູ້ ການເຮັດສັນຍາຜູກພັນລະຫວ່າງ ຜູ້ຜະລິດ ແລະ ຜູ້ຊື້ ທີ່ເປັນທຳ ແລະ ພັດທະນາການຄຸ້ມຄອງການຊື້ຂາຍພືດ ຜ່ານລະບົບເອເລັກໂຕຣນິກ;
5. ລັດ ກຳນົດນິຕິກຳ, ກົນໄກ ແລະ ວິທີການຄຸ້ມຄອງການລົງທຶນປູກພືດເປັນສິນຄ້າ ເພື່ອສະໜັບສະໜູນ ໃຫ້ຜູ້ລົງທຶນ ໄດ້ຮັບນະໂຍບາຍຍົກເວັ້ນ ພາສີ, ອາກອນມູນຄ່າເພີ່ມ ສຳລັບ ການນຳເຂົ້າພາຫະນະ, ເຄື່ອງມື ແລະ ອຸປະກອນ ເພື່ອຮັບໃຊ້ການຜະລິດ, ປຸງແຕ່ງພືດ ແລະ ຜະລິດຕະພັນພືດ;
6. ລັດ ຊຸກຍູ້, ສົ່ງເສີມ ໂຮງງານປຸງແຕ່ງພືດທີ່ໄດ້ຮັບມາດຕະຖານການຜະລິດທີ່ດີ ທີ່ໄດ້ຢັ້ງຢືນ ແລະ ຮັບຮອງ ຈາກກົມປູກຝັງ ຈະໄດ້ຮັບນະໂຍບາຍຫຼຸດຜ່ອນກະແສໄຟຟ້າ ເທົ່າກັບກະແສໄຟຟ້າກະສິກຳ;
7. ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການນຳໃຊ້ສິ່ງເສດເຫຼືອຈາກການຜະລິດ ແລະ ການປຸງແຕ່ງພືດໃຫ້ເກີດປະໂຫຍດສູງສຸດ ດ້ວຍການເຮັດ ຝຸ່ນ

ໜັກ, ຝຸ່ນບົ່ມ, ແກັສຊີວະພາບ ແລະ ພະລັງງານໝູນວຽນ ເຊິ່ງເປັນມິດກັບສິ່ງແວດລ້ອມ.

## 4. ນະໂຍບາຍດ້ານການສົ່ງອອກພືດ ແລະ ຜະລິດຕະພັນພືດ

**ບັນຫາ:**

1. ການປະຕິບັດມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ, ມາດຕະຖານດ້ານເຕັກນິກ ເປັນຕົ້ນ ການສ້າງສະຖານີກັກກັນພືດ, ການປ້ອງກັນ ແລະ ຄວບຄຸມສັດຕູພືດ, ລະບົບກວດສອບຄືນຫຼັງ ແລະ ການວິໄຈສັດຕູພືດ ລວມທັງ ການຢັ້ງຢືນສຸຂານາໄມພືດ ແລະ ຄຸນນະພາບຜະລິດຕະພັນພືດ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ;

2. ຂໍ້ມູນຂ່າວສານດ້ານການຕະຫຼາດ ແລະ ການຄຸ້ມຄອງລາຄາສິນຄ້າປະເພດ ພືດ ແລະ ຜະລິດຕະພັນພືດ ຍັງບໍ່ໄດ້ຮັບການຄຸ້ມຄອງຢ່າງເປັນລະບົບ;

3. ການເຈລະຈາເຕັກນິກເປີດຕະຫຼາດ ພືດ ແລະ ຜະລິດຕະພັນພືດ ກັບບັນດາປະເທດຄູ່ຄ້າ ຍັງບໍ່ທັນໄດ້ຫຼາຍ ແລະ ຊັກຊ້າ ເປັນຕົ້ນ ແມ່ນພືດທີ່ປະເທດເຮົາມີທ່າແຮງ;

4. ໂຄງລ່າງພື້ນຖານເຕັກນິກ (ສະຖານີກັກກັນພືດ, ຫ້ອງວິໄຈ, ເຄື່ອງມືອຸປະກອນ...), ເຈົ້າໜ້າທີ່ກັກກັນພືດ ຍັງຈຳກັດ ແລະ ຜູ້ປະກອບການ ບໍ່ປະຕິບັດຕາມເງື່ອນໄຂດ້ານສຸຂານາໄມ ແລະ ສຸຂານາໄມພືດ ກ່ຽວກັບ ການນຳເຂົ້າ-ສົ່ງອອກ ພືດ ແລະ ຜະລິດຕະພັນພືດ;

5. ການບໍລິການຂົນສົ່ງ, ຈຸດຄ່ຽນຖ່າຍ, ສະຖານທີ່ພັກສິນຄ້າ ແລະ ສິ່ງອໍານວຍຄວາມສະດວກອື່ນ ຢູ່ພາຍໃນປະເທດຈໍາກັດ ແລະ ບໍ່ທັນສະໄໝ.

**ຈຸດປະສົງ:**

1. ປັບປຸງສະຖານີກັກກັນພືດ, ຫ້ອງວິໄຈ, ເຄື່ອງມືອຸປະກອນ ດ້ານສຸຂານາໄມພືດ ແລະ ຄວາມປອດໄພຂອງພືດ, ການບໍລິການຂົນສົ່ງ ຈຸດຄ່ຽນຖ່າຍ ແລະ ສະຖານທີ່ພັກສິນຄ້າ ສາມາດປະຕິບັດ ຕາມເງື່ອນໄຂການນໍາເຂົ້າ ແລະ ສົ່ງອອກ ຂອງປະເທດຄູ່ຄ້າ;
2. ເພື່ອສະໜອງຂໍ້ມູນຂ່າວສານດ້ານວິຊາການ ແລະ ລາຍການສິນຄ້າປະເພດພືດ ແລະ ຜະລິດຕະພັນພືດ ສົ່ງອອກໃຫ້ຫຼາຍຂຶ້ນ.

**ນະໂຍບາຍ:**

1. ລັດ ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ການນໍາໃຊ້ເຕັກນິກທີ່ທັນສະໄໝເຂົ້າໃນວຽກງານ ສຸຂານາໄມ ແລະ ສຸຂານາໄມພືດ ສໍາລັບ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ໃຫ້ມີຄວາມເຂັ້ມແຂງ;
2. ລັດ ຊຸກຍູ້, ສົ່ງເສີມ ໃຫ້ຜູ້ປະກອບການລົງທຶນ ສ້າງ ແລະ ພັດທະນາ ສະຖານີກັກກັນພືດ, ຫ້ອງວິໄຈສັດຕູພືດ, ສານພິດຕົກຄ້າງ, ຄຸນນະພາບສິນຄ້າ ແລະ ການຣົມຢາຂ້າເຊື້ອ;
3. ລັດ ຊຸກຍູ້, ສົ່ງເສີມ ໃຫ້ຜູ້ປະກອບການລົງທຶນ ສ້າງ ລະບົບການບໍລິການຂົນສົ່ງ, ຈຸດຄ່ຽນຖ່າຍ ແລະ ສະຖານທີ່ພັກສິນຄ້າ ໃຫ້ມີຫຼາຍແຫ່ງ ແລະ ທັນສະໄໝ;
4. ລັດ ເພີ່ມທະວີໃນການເກັບກໍາຂໍ້ມູນປະເມີນຄວາມສ່ຽງສັດຕູພືດ, ການເຈລະຈາເຕັກນິກເປີດຕະຫຼາດ ພືດ ແລະ ຜະລິດຕະພັນພືດ ໃຫ້ຫຼາຍຂຶ້ນ;
5. ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ, ເງື່ອນໄຂການສົ່ງອອກ ໃຫ້ແກ່ຜູ້ປະກອບການ ປະຕິບັດໃຫ້ສອດຄ່ອງກັບແຕ່ລະປະເທດຄູ່ຄ້າ;

6. ລັດ ສ້າງຄວາມເຂັ້ມແຂງໃຫ້ແກ່ ວິຊາການ, ເຈົ້າໜ້າທີ່ ແລະ ຜູ້ປະກອບການ ປະຕິບັດໃຫ້ສອດຄ່ອງຕາມເງື່ອນໄຂນໍາເຂົ້າ-ສົ່ງອອກຂອງປະເທດຄູ່ຄ້າ.

## 5. ນະໂຍບາຍບຸກຄະລາກອນ ແລະ ຜູ້ອອກແຮງງານ

**ບັນຫາ:**

1. ພະນັກງານວິຊາການສະເພາະດ້ານ ເຊັ່ນ: ພະຍາດ, ແມງໄມ້, ວິໄຈສານເຄມີຕົກຄ້າງ, ກະສິກໍາສະອາດ, ວິທະຍາສາດອາຫານ ຍັງມີຈໍາກັດ ບໍ່ສາມາດບັນຈຸໄດ້ຕາມແຜນຕໍາແໜ່ງງານທີ່ມີດ;
2. ປະລິມານ ແລະ ຄຸນນະພາບຂອງແຮງງານ ໃນຂົງເຂດການຜະລິດ, ການປຸງແຕ່ງພືດ ແລະ ຜະລິດຕະພັນພືດ ຍັງບໍ່ພຽງພໍ;
3. ການຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ ເພື່ອເພີ່ມຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານຂະແໜງການປູກຝັງ ຍັງມີໜ້ອຍແລະ ບໍ່ຕໍ່ເນື່ອງ.

**ຈຸດປະສົງ:**

1. ເພື່ອເພີ່ມຈໍານວນນັກວິຊາການສະເພາະດ້ານ ໃຫ້ຂະແໜງການປູກຝັງ ແຕ່ສູນກາງຮອດທ້ອງຖິ່ນ ຢ່າງພຽງພໍ;
2. ຊຸກຍູ້ ໃຫ້ຜູ້ປະກອບການນໍາໃຊ້ ນັກວິຊາການປູກຝັງ ເຂົ້າປະກອບອາຊີບຢູ່ໃນຟາມປູກພືດ, ໂຮງງານປຸງແຕ່ງພືດ ແລະ ຜະລິດຕະພັນພືດ ໃຫ້ຫຼາຍຂຶ້ນ;
3. ເພື່ອພັດທະນາທັກສະສີມືແຮງງານໃນຂົງເຂດປູກຝັງ ໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝ ສາມາດຕອບສະໜອງກັບການເຕີບໂຕຂອງຂະແໜງການປູກຝັງ ຢູ່ໃນແຕ່ລະທ້ອງຖິ່ນ.

**ນະໂຍບາຍ:**

1. ລັດ ກໍານົດແຜນການພັດທະນາບຸກຄະລາກອນ ແລະ ກໍານົດຕໍາແໜ່ງງານຕາມພາລະບົດບາດ ແລະ ໜ້າທີ່ຂອງຂະແໜງການປູກຝັງ ຕິດພັນກັບການຍົກລະດັບ ໃຫ້ກົມກຽວ ແລະ ສອດຄ່ອງກັບຄວາມຕ້ອງການໃນແຕ່ລະໄລຍະ;
2. ລັດ ສົ່ງເສີມ ວິຊາການປູກຝັງ ແລະ ຜູ້ອອກແຮງງານ ເຂົ້າຮ່ວມ ຝຶກອົບຮົມ, ສໍາມະນາ ແລະ ແລກປ່ຽນບົດຮຽນ ເພື່ອສ້າງໂອກາດໃນການປະກອບອາຊີບ ແລະ ເຂົ້າເຖິງຕະຫຼາດແຮງງານ ພາຍໃນ ແລະ ຕ່າງປະເທດ ເພື່ອນໍາໄປສູ່ການເຮັດສັນຍາ ແລະ ເຮັດວຽກຮ່ວມກັນ;
3. ລັດ ຊຸກຍູ້, ສົ່ງເສີມ ໃຫ້ຫຼາຍພາກສ່ວນ ລົງທຶນໃສ່ປັບປຸງ ສູນ, ສະຖານີ ຂອງສູນກາງ ແລະ ທ້ອງຖິ່ນ, ປະກອບກົນຈັກ ແລະ ເຄື່ອງມືອຸປະກອນຮັບໃຊ້ການຜະລິດ ທີ່ທັນສະໄໝ ໄປຄຽງຄູ່ກັບການປັບປຸງ ຫຼັກສູດການຮຽນ-ການສອນ, ຄູ່ມືວິຊາການ; ຊຸກຍູ້ພາກເອກະຊົນ ສ້າງສູນຮຽນຮູ້ ແລະ ຄຣີນິກພືດ.

## 6. ນະໂຍບາຍຮັບປະກັນຄວາມສ່ຽງ ຕໍ່ການປູກພືດ

**ບັນຫາ:**

1. ການປູກພືດ ຂອງ ສປປ ລາວ ແມ່ນ ເປັນການປູກແບບຂະໜາດນ້ອຍ ກະແຈກກະຈາຍ ສ່ວນໃຫຍ່ຍັງຂຶ້ນກັບປັດໄຈທໍາມະຊາດ ເປັນຫຼັກການນໍາໃຊ້ເຕັກນິກ ແລະ ເຕັກໂນໂລຊີໃໝ່ ຍັງບໍ່ທັນຫຼາຍ;
2. ສະພາບການປ່ຽນແປງຂອງດິນຟ້າອາກາດ ເປັນສາເຫດໃຫ້ເກີດໄພພິບັດທາງທໍາມະຊາດ, ການລະບາດຂອງສັດຕູພືດ ເຮັດໃຫ້ຜົນຜະລິດພືດ ເກີດຄວາມເສຍຫາຍ ແລະ ຄັງແຮສຸກເສີນ ສໍາລັບ ການແກ້ໄຂໃນເວລາເກີດວິກິດການ ຍັງບໍ່ພຽງພໍ;

3. ການຄ້ຳປະກັນລາຄາຜົນຜະລິດພືດ ແລະ ປັດໃຈການຜະລິດ (ແນວພັນພືດ, ຝຸ່ນ, ແລະ ຢາປາບສັດຕູພືດ) ຍັງບໍ່ຖືກຈັດຕັ້ງປະຕິບັດໄດ້ດີເທົ່າທີ່ຄວນ.

**ຈຸດປະສົງ:**

1. ເພື່ອຮັບປະກັນການປູກພືດ ໃຫ້ມີການຂະຫຍາຍຕົວ ຍົກສູງສະມັດຕະພາບຜົນຜະລິດພືດສະບຽງອາຫານ ແລະ ພືດສິນຄ້າດ້ວຍການນຳໃຊ້ວິທະຍາສາດ-ເຕັກນິກ ທີ່ທັນສະໄໝ ແລະ ສ້າງຄັງແຮສຸກເສີນຮອງຮັບ ເພື່ອແກ້ໄຂຄວາມສ່ຽງທີ່ຈະເກີດຂຶ້ນ;
2. ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການ ປ້ອງກັນ ແລະ ຄວບຄຸມ ການລະບາດສັດຕູພືດ ແລະ ພ້ອມທັງສ້າງແຜນແຮສຸກເສີນເພື່ອຮັບມືກັບໄພພິບັດທາງທຳມະຊາດ;
3. ເພື່ອຊຸກຍູ້, ສົ່ງເສີມ ໃຫ້ຜູ້ຜະລິດ ແລະ ຜູ້ປະກອບການສ້າງຕັ້ງກຸ່ມ, ສະຫະກອນ ຫຼື ສະມາຄົມ ຜູ້ຜະລິດພືດເປັນສິນຄ້າ ໃນການຄ້ຳປະກັນລາຄາ.

**ນະໂຍບາຍ:**

1. ລັດ ໃຫ້ນະໂຍບາຍແກ່ຜູ້ລົງທຶນ ທີ່ນຳໃຊ້ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເຂົ້າໃນການຜະລິດ ຕິດພັນກັບ ການປຸງແຕ່ງ ແລະ ການສົ່ງອອກ;
2. ລັດ ສະໜັບສະໜູນການສ້າງລະບົບຕາໜ່າງປ້ອງກັນພືດ, ອຸຕຸກະເສດ ແລະ ລະບົບການເຂົ້າເຖິງຂໍ້ມູນຂ່າວສານດ້ານການປ້ອງກັນພືດ ໃຫ້ມີຄວາມເຂັ້ມແຂງ ແຕ່ສູນກາງຮອດທ້ອງຖິ່ນ;
3. ລັດ ຄົ້ນຄວ້າສ້າງກອງທຶນຄ້ຳປະກັນລາຄາຂັ້ນຕ່ຳ ເພື່ອຮັບປະກັນໃຫ້ຜູ້ຜະລິດ, ກຸ່ມ, ສະຫະກອນ ຫຼື ສະມາຄົມ ແລະ ຜູ້ປະກອບການ ໃນການປູກພືດຍຸດທະສາດ ແລະ ພືດທີ່ມີທ່າແຮງ ເປັນສິນຄ້າ;

4. ລັດ ຊຸກຍູ້, ສົ່ງເສີມ ຜູ້ປະກອບການ ເຮັດສັນຍາຜູກພັນສອງສົ້ນ ເພື່ອກໍານົດລາຄາຄໍ້າປະກັນຂັ້ນຕໍ່າ ແລະ ມາດຕະຖານ ໃຫ້ແກ່ຜູ້ຜະລິດ;
5. ລັດ ຄົ້ນຄວ້າສ້າງຄັງແຮ ແນວພັນພືດ, ຝຸ່ນ ແລະ ເຊື້ອຊີວະວິທະຍາ ເພື່ອຮັບໃຊ້ແກ່ການຜະລິດໃນເວລາເກີດໄພພິບັດທໍາມະຊາດ.

## 7. ນະໂຍບາຍສົ່ງເສີມການນໍາໃຊ້ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີທັນສະໄໝ ແລະ ພະລັງງານ

**ບັນຫາ:**

1. ການນໍາໃຊ້ ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທີ່ສະອາດ ແລະ ທັນສະໄໝ ເຂົ້າໃນລະບົບການຜະລິດ-ການປຸງແຕ່ງພືດ ລວມທັງ ການສໍາຫຼວດ, ການເຝົ້າລະວັງ, ການປ້ອງກັນ ແລະ ຄວບຄຸມ ການລະບາດຂອງສັດຕູພືດ ຍັງຈໍາກັດ;
2. ບຸກຄະລາກອນ ຍັງບໍ່ທັນມີຄວາມຮູ້ຄວາມສາມາດ ໃນການປະດິດ ແລະ ນໍາໃຊ້ເຄື່ອງມືທີ່ທັນສະໄໝ ເຂົ້າໃນວຽກງານປູກຝັງ ພ້ອມດຽວກັນນັ້ນ ຜູ້ຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ ຍັງບໍ່ທັນ ສາມາດຮັບຮູ້ ແລະ ນໍາໃຊ້ ເຕັກນິກນະວັດຕະກໍາໃໝ່;
3. ການເຂົ້າເຖິງ ແລະ ການນໍາໃຊ້ ເຄື່ອງມື, ກົນຈັກທີ່ທັນສະໄໝ, ເຕັກໂນໂລຊີຜະລິດໄຟຟ້າດ້ວຍພະລັງງານແສງຕາເວັນ, ພະລັງງານລົມ, ພະລັງງານຄວາມຮ້ອນໃຕ້ດິນ ແລະ ພະລັງງານຊີວະມວນ ເຂົ້າໃນການຜະລິດ ແລະ ປຸງແຕ່ງພືດ ຍັງຈໍາກັດ;
4. ຜູ້ຜະລິດ ແລະ ຜູ້ປະກອບການ ທີ່ນໍາໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ມີຄວາມຈໍາເປັນນໍາໃຊ້ພະລັງງານໄຟຟ້າຫຼາຍຂຶ້ນ ແຕ່ຕ້ອງໄດ້ຮັບພາລະຄ່າໃຊ້ຈ່າຍຄ່າກະແສໄຟຟ້າສູງ ໃນອັດຕາທີ່ແຕກຕ່າງກັນ ເຮັດໃຫ້ຕົ້ນທຶນສູງຂຶ້ນ.

**ຈຸດປະສົງ:**

1. ເພື່ອຊຸກຍູ້, ສົ່ງເສີມ ຜູ້ຜະລິດ ແລະ ຜູ້ປະກອບການ ນຳໃຊ້ ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການປູກພືດ ໃຫ້ເໝາະສົມກັບການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ເປັນມິດກັບສິ່ງແວດລ້ອມ;
2. ເພື່ອຍົກສູງສະມັດຕະພາບຂອງຜົນຜະລິດ, ຫຼຸດຜ່ອນຕົ້ນທຶນການຜະລິດ ສາມາດເປັນສິນຄ້າແຂ່ງຂັນກັບຕະຫຼາດພາຍໃນ ແລະ ສາກົນ.

**ນະໂຍບາຍ:**

1. ລັດ ສົ່ງເສີມໃຫ້ມີການນຳໃຊ້ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ, ກະສິກຳອັດສະລິຍະ ຫຼື ໃນຮູບແບບຟາມອັດສະລິຍະ (Smart farm) ເຂົ້າໃນການຜະລິດ ແລະ ການປຸງແຕ່ງພືດ ຕິດພັນກັບການປ່ຽນແປງຂອງສະພາບດິນຟ້າອາກາດ ເພື່ອປະຢັດຕົ້ນທຶນ;
2. ລັດ ສົ່ງເສີ່ມໃຫ້ມີການຄົ້ນຄວ້າ, ທົດລອງ ການນຳໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການຜະລິດ ໃຫ້ເໝາະສົມກັບແຕ່ລະເຂດແຄວ້ນ;
3. ລັດ ຊຸກຍູ້, ສົ່ງເສີມ ໃຫ້ຜູ້ຜະລິດ, ຜູ້ປະກອບການ ລົງທຶນໃສ່ການຜະລິດ-ການປຸງແຕ່ງພືດ ເພື່ອເປັນສິນຄ້າສົ່ງອອກ ທີ່ນຳໃຊ້ ເຕັກນິກ-ເຕັກໂນໂລຊີ, ນະວັດຕະກຳໃໝ່, ເຄື່ອງມື, ອຸປະກອນ, ຂໍ້ມູນຂ່າວສານ ແລະ ການສື່ສານ ທີ່ທັນສະໄໝ;
4. ອຳນວຍຄວາມສະດວກໃນການນຳເຂົ້າ ພາຫະນະ, ເຄື່ອງມື ແລະ ອຸປະກອນ ທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ເພື່ອໃຊ້ເຂົ້າໃນວຽກງານຜະລິດພືດ;
5. ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການຜະລິດ, ການນຳໃຊ້ ແລະ ການເຂົ້າເຖິງ ເຄື່ອງມື, ກົນຈັກທີ່ທັນສະໄໝ, ເຕັກໂນໂລຊີພະລັງງານທົດ

ແທນທີ່ສະອາດ (ພະລັງງານແສງຕາເວັນ, ພະລັງງານລົມ, ພະລັງງານຄວາມຮ້ອນໃຕ້ດິນ ແລະ ພະລັງງານຊີວະມວນ) ເຂົ້າໃນການຜະລິດ ແລະ ການປຸງແຕ່ງພືດ ໃຫ້ຫຼາຍຂຶ້ນ;

6. ລັດ ອອກນະໂຍບາຍ ຫຼຸດຜ່ອນຄ່າກະແສໄຟຟ້າກະສິກຳ ຫຼື ເທົ່າກັບຄ່າກະແສໄຟຟ້າຊົນລະປະທານ ສຳລັບ ການຜະລິດແບບເປັນຟາມ, ຟາມອັດສະລິຍະ (Smart farm), ສະຖານທີ່ປະກອບການຜະລິດ ຕາມການຜະລິດກະສິກຳສະອາດ ແລະ ການປຸງແຕ່ງທີ່ດີ ທີ່ຍັ້ງຢືນ ແລະ ຮັບຮອງ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

## 8. ນະໂຍບາຍດ້ານສິນເຊື່ອ ແລະ ການເຂົ້າເຖິງແຫຼ່ງທຶນ

**ບັນຫາ:**

1. ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ ຈາກສະຖາບັນການເງິນ, ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄວາມຫຍຸ້ງຍາກ ແລະ ຫຼາຍຂັ້ນ ຫຼາຍຂອດ, ສ່ວນໃຫຍ່ຍັງນໍາໃຊ້ແຫຼ່ງທຶນດອກເບ້ຍສູງ, ໄລຍະກູ້ຢືມສັ້ນ;
2. ລັດ ມີແຫຼ່ງທຶນຈໍາກັດ ແລະ ຍັງບໍ່ທັນມີນະໂຍບາຍສິນເຊື່ອສະເພາະສໍາລັບ ສົ່ງເສີມການຜະລິດ ແລະ ການປຸງແຕ່ງ ພືດເປັນສິນຄ້າ.

**ຈຸດປະສົງ:**

1. ເພື່ອສ້າງເງື່ອນໄຂໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການ ໃນການດໍາເນີນກິດຈະການປູກພືດ ແລະ ການປຸງແຕ່ງພືດ ເປັນສິນຄ້າໃຫ້ສາມາດເຂົ້າເຖິງແຫຼ່ງທຶນ ດ້ວຍເງື່ອນໄຂທີ່ເໝາະສົມ;
2. ເພື່ອໃຫ້ສະຖາບັນການເງິນ, ຊາວກະສິກອນ ແລະ ຜູ້ປະກອບການສາມາດດໍາເນີນກິດຈະການຮ່ວມກັນໄດ້ ຕາມເງື່ອນໄຂ, ກົດໝາຍ ແລະ ລະບຽບການ ທີ່ກໍານົດ.

**ນະໂຍບາຍ:**

1. ລັດ ຈັດສັນທຶນ ແລະ ງົບປະມານສະເພາະ ເຂົ້າໃນການປູກພືດ, ການປຸງແຕ່ງ ແລະ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ລວມທັງ ການປ້ອງກັນ ແລະ ຄວບຄຸມການລະບາດຂອງສັດຕູພືດ, ການວິໄຈສັດຕູພືດ, ການຍົ້ງຍືນກະສິກຳສະອາດ, ການຍົ້ງຍືນຄຸນນະພາບຜະລິດຕະພັນພືດ, ວຽກງານສຸຂານາໄມ ແລະ ສຸຂານາໄມພືດ ຕາມໂຄງການຕ່າງໆ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ໃຫ້ຫຼາຍຂຶ້ນ;
2. ລັດ ກຳນົດ ແລະ ອອກນະໂຍບາຍ ຜ່ອນຜັນໄລຍະເວລາຊຳລະສິນເຊື່ອສະເພາະ ໃນກໍລະນີ ຊາວກະສິກອນ ແລະ ຜູ້ປະກອບການ ປະສົບໄພພິບັດທຳມະຊາດ;
3. ກຳນົດ ແລະ ອອກນະໂຍບາຍການເຂົ້າເຖິງແຫຼ່ງທຶນຂອງລັດຖະບານ ແລະ ສະຖາບັນການເງິນ ມີນະໂຍບາຍສິນເຊື່ອຖືມຂຸມດອກເບ້ຍ ແລະ ນະໂຍບາຍສິນເຊື່ອກະຈາຍລົງສູ່ທ້ອງຖິ່ນ ດ້ວຍອັດຕາດອກເບ້ຍ, ໄລຍະການກູ້ຢືມ ແລະ ການຜ່ອນຜັນ, ການທົດແທນທຶນຄືນ ຕາມລະບຽບການ ແລະ ກົດໝາຍກຳນົດໄວ້ໃນແຕ່ລະໄລຍະ ລະຫວ່າງຊາວກະສິກອນ, ຜູ້ປະກອບການ ແລະ ສະຖາບັນການເງິນ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຮ່ວມກັນ ດັ່ງຕາຕະລາງລຸ່ມນີ້:

<table>
<tr><th>ລ/ດ</th><th colspan="2">ປະເພດຜູ້ຜະລິດ, ກຸ່ມຜະລິດ ແລະ ຜູ້ປະກອບການ</th><th>ໄລຍະການກູ້ຢືມ</th><th>ອັດຕາດອກເບ້ຍຕໍ່ປີ</th><th colspan="2">ເງື່ອນໄຂນະໂຍບາຍຕົ້ນທຶນ ແລະ ດອກເບ້ຍ</th></tr>
<tr><td rowspan="3">1</td><td rowspan="3">ພືດອາຍຸສັ້ນ ແລະ ພືດອຸດສາຫະກຳ</td><td>ເຂົ້າ, ສາລີ, ມັນຕົ້ນ, ໝາກໂມ, ມັນດ້າງ, ຖົ່ວຜັກຍາວ, ຖົ່ວເຫຼືອງ ຖົ່ວ, ຜັກສົດ, ຖົ່ວເບີ, ຖົ່ວດິນ, ໝາກເດືອຍ, ພືດຜັກ</td><td>ເກີນ 3 ປີ</td><td>5%</td><td>ຈ່າຍແຕ່ດອກເບ້ຍປີທີ 1-2</td><td>ຈ່າຍຕົ້ນທຶນ ແລະ ດອກເບ້ຍປີທີ 3</td></tr>
<tr><td>ອ້ອຍ</td><td>ເກີນ 3 ປີ</td><td>5%</td><td>ຈ່າຍແຕ່ດອກເບ້ຍປີທີ 1-2</td><td>ຈ່າຍຕົ້ນທຶນ ແລະ ດອກເບ້ຍປີທີ 3</td></tr>
<tr><td>ໝາກກ້ວຍ</td><td>ເກີນ 5 ປີ</td><td>5%</td><td>ຈ່າຍແຕ່ດອກເບ້ຍປີທີ 1-2</td><td>ຈ່າຍຕົ້ນທຶນ ແລະ ດອກເບ້ຍປີທີ 3</td></tr>
</table>

| | | | | | | |
|---|---|---|---|---|---|---|
| 2 | ໄມ້ໃຫ້ໝາກ | ໝາກມ່ວງ, ໝາກມີ້, ໝາກ ພຸກ, ໝາກກ້ຽງ, ໝາກນາວ, ໝາກມ່ວງຫິມະພານ, ໝາກລຳໄຍ, ໝາກລິ້ນຈີ່, ໝາກຖົ່ວລຽນ ແລະ ໝາກໄມ້ອື່ນໆ | ເກີນ 7 ປີ | 3% | ປອດດອກເບ້ຍແລະ ຕົ້ນທຶນ ຮອດປີທີ 4 | ຈ່າຍຕົ້ນທຶນ ແລະດອກເບ້ຍປີທີ 5 |
| | | ໝາກໝອດ, ໝາກມັງກອນ | ເກີນ 5 ປີ | 3% | ປອດດອກເບ້ຍແລະ ຕົ້ນທຶນ ຮອດປີທີ 3ະ | ຈ່າຍຕົ້ນທຶນ ແລະດອກເບ້ຍປີທີ 4 |
| 3 | ກາເຟ | | ເກີນ 7 ປີ | 3% | ປອດດອກເບ້ຍແລະ ຕົ້ນທຶນ ຮອດປີທີ 4 | ຈ່າຍຕົ້ນທຶນ ແລະດອກເບ້ຍປີທີ 5 |
| | ຊາ | | ເກີນ 5 ປີ | 3% | ປອດດອກເບ້ຍແລະ ຕົ້ນ | ຈ່າຍຕົ້ນທຶນ ແລະ |

| | | | | | |
|---|---|---|---|---|---|
| | | | | ທຶນ ຮອດ ປີທີ 4 | ດອກເບ້ຍ ປີທີ 5 |
| 4 | ສ້າງຕັ້ງ ໂຮງງານປຸງແຕ່ງພືດ ແລະ ຜະລິດຕະພັນພືດ | ເກີນ 5 ປີ | 3% | ປອດ ດອກເບ້ຍ ແລະ ຕົ້ນ ທຶນ ຮອດ ປີທີ 5 | ຈ່າຍຕົ້ນ ທຶນ ແລະ ດອກເບ້ຍ ປີທີ 6 |

# ພາກທີ IV
# ມາດຕະການຈັດຕັ້ງປະຕິບັດ

ພາຍໃຕ້ການຊີ້ນໍາຂອງລັດຖະບານ, ກະຊວງກະສິກໍາ ແລະ ປ່າໄມ້ ຈະໄດ້ແຕ່ງຕັ້ງຄະນະຮັບຜິດຊອບຂັບເຄື່ອນ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ ໂດຍມີລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເປັນປະທານ ແລະ ມີຮອງ ຫຼື ຄະນະລັດຖະມົນຕີ ຂອງບັນດາກະຊວງທີ່ກ່ຽວຂ້ອງເຂົ້າຮ່ວມເປັນຄະນະກໍາມະການຊີ້ນໍາໂດຍຈະມີໜ້າທີ່ໃນການຊີ້ນໍາດ້ານການວາງແຜນ, ສ້າງກົນໄກ ແລະ ສະເໜີມາດຕະການຈັດຕັ້ງປະຕິບັດນະໂຍບາຍພ້ອມທັງພິຈາລະນາໂຄງການລົງທຶນທີ່ຈະໄດ້ຮັບນະໂຍບາຍ ແລະ ສະຫຼຸບລາຍງານໃຫ້ລັດຖະບານຮັບຊາບຢ່າງເປັນປົກກະຕິ. ໃນການຈັດຕັ້ງປະຕິບັດນະໂຍບາຍ, ກະຊວງກະສິກໍາ ແລະ ປ່າໄມ້ ມີຄວາມຮັບຜິດຊອບ ດັ່ງນີ້:

1. ປະຕິບັດມາດຕະການກະຕຸ້ນການຜະລິດ ດ້ວຍການສະເໜີເປັນໂຄງການລະອຽດ ເພື່ອສະເໜີຕໍ່ລັດຖະບານອະນຸມັດ;

2. ຮ່າງລະບຽບການເພື່ອສ້າງຕັ້ງກອງທຶນພັດທະນາ ແລະ ປ້ອງກັນຄວາມສ່ຽງຕໍ່ການປູກພືດ;
3. ແຕ່ງຕັ້ງຄະນະກໍາມະການ ກໍານົດມາດຕະຖານການຝຶກອົບຮົມ, ຄົ້ນຄວ້າກົນໄກຜົນຕອບແທນ, ມາດຕະຖານຟາມ, ຫົວໜ່ວຍລາຄາລວມທັງ ການອອກແບບການກວດກາ ແລະ ຢັ້ງຢືນມາດຕະຖານການຜະລິດ ແລະ ປຸງແຕ່ງພືດທີ່ດີ;
4. ພັດທະນາຈັດຕັ້ງກຸ່ມ, ສະຫະກອນ ແລະ ຈັດຕັ້ງຝຶກອົບຮົມດ້ານເຕັກນິກຮອບດ້ານໃຫ້ແກ່ສະມາຊິກກຸ່ມການປູກພືດ ເພື່ອສູ້ຊົນຫັນປ່ຽນຊາວກະສິກອນຈາກຜູ້ບໍລິໂພກ ແລະ ຊົມໃຊ້ຜົນຜະລິດໃຫ້ກາຍ ເປັນຜູ້ຜະລິດແບບມືອາຊີບເພື່ອເນັ້ນໃສ່ປະສິດທິພາບ, ຄຸນນະພາບ, ຄວາມປອດໄພ ແລະ ເປັນສິນຄ້າພາຍໃນ ແລະ ສົ່ງອອກ;
5. ປະສານ, ສົມທົບກັບກະຊວງອຸດສາຫະກໍາ ແລະ ການຄ້າພັດທະນາດ້ານການຕະຫຼາດ ແລະ ການຄ້າໂດຍໃຫ້ເນັ້ນໃສ່ການຄ້າແບບເປັນທໍາ, ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ ແລະ ຄົ້ນຄວ້າຮ່າງລະ ບຽບການສ້າງຕັ້ງກອງທຶນຄໍ້າປະກັນຄວາມສ່ຽງດ້ານລາຄາ ແລະ ການລົງທຶນ;
6. ປະສານກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າຊອກຫາ ແລະ ຈັດສັນງົບປະມານເຂົ້າໃນການປັບປຸງໂຄງລ່າງພື້ນຖານກ່ຽວກັບ ລະບົບການບໍລິການຂອງລັດ ເປັນຕົ້ນ ການພັດທະນາ ແລະ ສົ່ງເສີມດ້ານແນວພັນພືດ, ຝຸ່ນ, ຢາປາບສັດຕູພືດ, ການວິໄຈພະຍາດພືດ ລວມທັງ ການຄົ້ນຄວ້າທົດລອງ, ການສົ່ງເສີມ, ການຢັ້ງຢືນດ້ານມາດຕະຖານໃຫ້ຮັບປະກັນ, ພ້ອມນັ້ນ ກໍໃຫ້ຄົ້ນຄວ້າກົນໄກເອື້ອອໍານວຍ, ສະໜັບສະໜູນເພື່ອສ້າງເງື່ອນໄຂ ແລະ ສະເໜີລັດຖະບານ ເພື່ອໃຫ້ຊາວກະສິກອນ ແລະ ຜູ້

ປະກອບການ ທີ່ດຳເນີນທຸລະກິດດ້ານການປູກຝັງໄດ້ເຂົ້າເຖິງແຫຼ່ງທຶນ ແນໃສ່ ຍູ້ແຮງຂະບວນການຜະລິດໃຫ້ມີການຂະຫຍາຍຕົວທັງປະລິມານ ແລະ ຄຸນນະພາບ;

7. ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງສຶກສາທິການ ແລະ ກິລາ ແລະ ມະຫາວິທະຍາໄລແຫ່ງຊາດ ລວມທັງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ຮ່ວມກັນຂັບເຄື່ອນນະໂຍບາຍສະບັບນີ້ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ມີປະສິດທິຜົນ;

8. ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການກຳນົດ ແລະ ແບ່ງເຂດທີ່ດິນກະສິກຳ ຕາມຂອບເຂດຄວາມຮັບຜິດຊອບຕົນ;

9. ປະສານສົມທົບກັບ ຂະແໜງແຜນການ ແລະ ການລົງທຶນ, ຂະແໜງອຸດສາກະກຳ ແລະ ການຄ້າ, ຂະແໜງເຕັກໂນໂລຊີ ແລະ ການສື່ສານ, ຂະແໜງພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງການນຳເຂົ້າ, ການຜະລິດ ແລະ ການນຳໃຊ້ ວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທີ່ສະອາດ ແລະ ທັນສະໄໝ ເຂົ້າໃນການຜະລິດ, ການປຸງແຕ່ງພືດ ແລະ ຜະລິດຕະພັນພືດ;

10. ຮ່ວມມືກັບອົງການກວດສອບແຫ່ງລັດ ໃນການກວດກາ, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍ ແລະ ໂຄງການຕ່າງໆ ທີ່ຢູ່ພາຍໃຕ້ການອະນຸມັດຂອງລັດຖະບານ ຕາມ

ຫຼັກການຄວາມຖືກຕ້ອງສອດຄ່ອງກັບເປົ້າໝາຍຂອງນະໂຍບາຍ, ມີປະສິດທິພາບ, ມີປະສິດທິຜົນ, ຮັບປະກັນຄວາມຍືນຍົງ, ໂປ່ງໃສເປັນມິດກັບສິ່ງແວດລ້ອມ ແລະ ມີຜົນປະໂຫຍດໃຫ້ແກ່ການພັດທະນາເສດຖະກິດ ແລະ ສັງຄົມ ຂອງປະເທດຊາດ ແລະ ປະຊາຊົນ ຢ່າງແທ້ຈິງ;

11. ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ພາກເອກະຊົນໃຫ້ເຂົ້າເຖິງນະໂຍບາຍທີ່ລັດກຳນົດ ແລະ ເປັນເຈົ້າການໃນການສຶກສາຄວາມເປັນໄປໄດ້, ສະເໜີໂຄງການ ແລະ ປະກອບສ່ວນເຂົ້າໃນການລົງທຶນ ເພື່ອພັດທະນາລະບົບການປູກພືດ ຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ຍືນຍົງບົນພື້ນຖານການນຳໃຊ້ເຕັກນິກ-ເຕັກໂນໂລຊີ ທີ່ເໝາະສົມຕາມທິດນຳ 3 ການຮ່ວມມື ຄື: ການຮ່ວມມືລະຫວ່າງລັດ-ຜູ້ປະກອບການ ແລະ ປະຊາຊົນ.

## ພາກທີ V
## ການຕິດຕາມ ແລະ ປະເມີນຜົນ

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້ ໂດຍມີການຈັດຕັ້ງ, ການເກັບກຳຂໍ້ມູນ, ວິເຄາະ, ວິໄຈ ແລະ ສະຫຼຸບຕີລາຄາຖອດຖອນບົດຮຽນກ່ຽວກັບ ຄວາມຄືບໜ້າ, ຄວາມສອດຄ່ອງ ແລະ ຂີດຄວາມສາມາດໃນການປະຕິບັດບັນດາຈຸດປະສົງຄາດໝາຍທີ່ນະໂຍບາຍກຳນົດໄວ້, ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ມີໜ້າທີ່ເຂົ້າຮ່ວມໃນຂະບວນການຕິດຕາມ, ກວດກາປະເມີນຜົນ ແລະ ສາມາດຖືເອົາຜົນສຳເລັດຂອງການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້ ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງຕົນ.

ການຕິດຕາມກວດກາ ຈະເນັ້ນໃສ່ສອງດ້ານ ຄື: (1) ການຕິດຕາມກວດກາບັນດາປັດໄຈຂາເຂົ້າ ແລະ ຜົນງານຕ່າງໆ ແລະ (2) ການຕິດຕາມກວດກາໝາກຜົນໂດຍລວມ ຫຼື ການຕິດຕາມກວດກາຜົນກະທົບ, ການຕິດຕາມກວດກາໃຫ້ລວມເອົາທັງການຕິດຕາມບັນດາປັດໄຈໃນການນໍາເຂົ້າ ທີ່ໃຫ້ເຫັນເຖິງລາຍຈ່າຍພາກລັດ ແລະ ການຊ່ວຍເຫຼືອຂອງຕ່າງປະເທດ.

ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເປັນເຈົ້າການຕິດຕາມກວດກາ ແລະ ປະເມີນຜົນຢູ່ຂັ້ນທ້ອງຖິ່ນ ໂດຍໃຫ້ອີງໃສ່ເປົ້າໝາຍມະຫາພາກຂອງແຂວງທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍສະບັບນີ້. ພ້ອມດຽວກັນນັ້ນ, ແຂວງ ແລະ ຂະແໜງການຂອງແຂວງ ຕ້ອງມີການພົວພັນກັບໜ່ວຍງານຄຸ້ມຄອງມະຫາພາກຂອງຂັ້ນສູນກາງຢ່າງສະໜິດແໜ້ນ ແລະ ເປັນປົກກະຕິ ເພື່ອໃຫ້ສາມາດຕິດຕາມການຈັດຕັ້ງປະຕິບັດນະໂຍບາຍໃນລະດັບແຂວງຢ່າງມີປະສິດທິຜົນ. ນອກຈາກນັ້ນ, ແຂວງຕ້ອງເກັບກໍາ, ສັງລວມຂໍ້ມູນຂອງຕົນຢ່າງຄົບຖ້ວນ ແລະ ຊັດເຈນເປັນລະບົບ ເພື່ອສະໜອງໃຫ້ແກ່ຂັ້ນສູນກາງ. ສະນັ້ນ, ເພື່ອຮັບປະກັນການຕິດຕາມກວດກາຢ່າງເປັນປົກກະຕິ ແລະ ຖືກຕ້ອງ ແຂວງຕ້ອງມີລະບົບຂໍ້ມູນຂ່າວສານທີ່ຕິດພັນກັບຫ້ອງການຂັ້ນເມືອງຢ່າງຈະແຈ້ງ ພ້ອມທັງປະຕິບັດລະບອບການຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການໃຫ້ເປັນລະບົບປົກກະຕິ.

# ເອກະສານອ້າງອີງ


1. ມະຕິ ກອງປະຊຸມຄົບຄະນະ ຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ XI;
2. ຄໍາສັ່ງສະບັບເລກທີ 097/ກມສພ, ລົງວັນທີ 18 ກຸມພາ 2020 ວ່າດ້ວຍການເພີ່ມທະວີການນໍາພາຊີ້ນໍາ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃຫ້ປະຊາຊົນ *(ຍູ້ແຮງການສົ່ງເສີມການຜະລິດກະສິກໍາ ປ່າໄມ້ເປັນສິນຄ້າ ຕິດພັນກັບອຸດສາຫະກໍາປຸງແຕ່ງ ແລະ ການຕະຫຼາດຕາມທ່າແຮງໄດ້ປຽບຂອງທ້ອງຖິ່ນ ແລະ ເຂດແຄວ້ນ, ຊຸກຍູ້ການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບໃນການຜະລິດສິນຄ້າສົດ, ຊີວະພາບ ສະອາດ, ປອດໄພ ສະໜອງໃຫ້ແກ່ຕົວເມືອງ ປ່ຽນແທນການນໍາເຂົ້າ, ການຜະລິດສິນຄ້າທີ່ເປັນທ່າແຮງໄດ້ປຽບເພື່ອສົ່ງອອກ);*
3. ຄໍາສັ່ງ ສະບັບເລກທີ 01/ກມສພ, ລົງວັນທີ 26 ກໍລະກົດ 2021 ວ່າດ້ວຍການເພີ່ມທະວີນໍາພາຊີ້ນໍາ ຂອງຄະນະພັກແຕ່ລະຂັ້ນໃນການຈັດຕັ້ງປະຕິບັດມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ***ຂໍ້ 2.1****"ການສົ່ງເສີມການຜະລິດ ແມ່ນເນັ້ນໃສ່ການຜະລິດເພື່ອທົດແທນການນໍາເຂົ້າ ແລະ ເພື່ອການສົ່ງອອກຢ່າງແຂງແຮງ ໄປຍັງຕະຫຼາດພາກພື້ນ ແລະ ສາກົນເປັນກ້າວໆ" ແລະ ຂໍ້ 3 ຂີດໜ້າ 5 "ໃຫ້ສືບຕໍ່ຄົ້ນຄວ້າປັບປຸງ ແລະ ສ້າງເພີ່ມບັນດານິຕິກໍາຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ການຄຸ້ມຄອງ-ບໍລິຫານລັດກໍຄືການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ. ນະໂຍບາຍ, ກົດໝາຍ ຫຼື ນິຕິກໍາໃດໆ ຫາກຂັດກັບທິດ ຫຼື ຈິດໃຈ ການແກ້ໄຂບັນຫາເສດຖະກິດການເງິນ, ຖ້າແກ້ແລ້ວ ຫຼື ປັບປຸງໄດ້ ແມ່ນຈະໄດ້ປະສິດທິຜົນສູງ ຕໍ່ສ່ວນລວມ ກໍຄວນເດັດດ່ຽວປັບປຸງ, ແກ້ໄຂ ບໍ່ໃຫ້ຄາຍ້ອນນິຕິກໍາ... ");*

4. ມະຕິ ກອງປະຊຸມໃຫຍ່ຜູ້ແທນຂອງອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ຄັ້ງທີ VI;
5. ມະຕິ ຂອງສະພາແຫ່ງຊາດ ສະບັບເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018 ວ່າດ້ວຍ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030;
6. ມະຕິ ຂອງສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ວ່າດ້ວຍ ການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ***(ຂໍ້ 10 ກຳນົດນະໂຍບາຍສົ່ງເສີມຈຸນລະວິສາຫະກິດຂະໜາດນ້ອຍຂະໜາດກາງ ໃຫ້ຈະແຈ້ງ ແລະ ເປັນຮູບປະທຳຫຼາຍຂຶ້ນ ເປັນຕົ້ນ ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕ່ຳ, ການຊອກຫາຕະຫຼາດຈຳໜ່າຍ, ການສ້າງຕ່ອງໂສ້ການຜະລິດ);***
7. ມະຕິ ຂອງລັດຖະບານ ເລກທີ 07/ລບ, ລົງວັນທີ 04 ຕຸລາ 2021 ວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງຜັນຂະຫຍາຍມະຕິຂອງ ສະພາແຫ່ງຊາດ;
8. ແຜນດຳເນີນງານ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0734/ກປ, ລົງວັນທີ 16 ທັນວາ 2021 ກ່ຽວກັບ ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ກ່ຽວກັບ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ***(ກຳນົດນະໂຍບາຍ ແລະ ນິຕິກຳຕ່າງໆ ຕາມທິດການຜະລິດທັນສະໄໝ, ສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ);***
9. ກົດໝາຍ ວ່າດ້ວຍກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
10. ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;

11. ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 07 ພະຈິກ 2016;
12. ກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
13. ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
14. ກົດໝາຍ ວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011;
15. ດຳລັດ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
16. ດຳລັດ ວ່າດ້ວຍແນວພັນພືດ ສະບັບເລກທີ 238/ລບ, ລົງວັນທີ 18 ພຶດສະພາ 2020;
17. ດຳລັດ ວ່າດ້ວຍກຸ່ມ ແລະ ສະຫະກອນ ສະບັບເລກທີ 606/ລບ ລົງວັນທີ 26 ພະຈິກ 2020;
18. ດຳລັດ ວ່າດ້ວຍກອງທຶນສົ່ງເສີມ ວິສະຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019;
19. ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າຢູ່ ສປປ ລາວ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019;
20. ຂໍ້ຕົກລົງ ວ່າດ້ວຍມາດຕະການສູຂານາໄມພືດ ສຳລັບ ການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2020;
21. ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບ ການສົ່ງອອກ ແລະ ສົ່ງອອກຕໍ່, ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2986/ກປ ລົງວັນທີ 28 ມິຖຸນາ 2019;

22. ຂໍ້ຕົກລົງ ວ່າດ້ວຍມາດຕະຖານກະສິກຳອິນຊີ ສະບັບເລກທີ 1393/ກປ, ລົງວັນທີ 11 ເມສາ 2022;
23. ຂໍ້ຕົກລົງ ວ່າດ້ວຍມາດຕະຖານກະສິກຳທີ່ດີ ກ່ຽວກັບ ຄວາມປອດໄພຂອງຜົນຜະລິດ ສະບັບເລກທີ 3004/ກປ, ລົງວັນທີ 15 ມິຖຸນາ 2022;
24. ຄຳແນະນຳ ກ່ຽວກັບ ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານອາກອນກຳໄລ ແລະ ດ້ານຄ່າເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ສະບັບເລກທີ 0760/ກຜທ, ລົງວັນທີ 14 ພຶດສະພາ 2021.

ສະໜັບສະໜູນການຈັດພິມໂດຍ

ໂຄງການ ສ້າງຄວາມເຊື່ອມໂຍງເພື່ອຂະຫຍາຍເຄືອຂ່າຍກະສິກຳ (ໂຄງການ ຄລີນ)